# ແບບຟອມປະເມີນມາດຕະຖານການທ່ອງທ່ຽວ
# ແບບປະຊາຊົນມີສ່ວນຮ່ວມອາຊຽນ
## ASEAN Community Based Tourism Standard



ພະແນກການທ່ອງທ່ຽວແບບອະນຸລັກ, ກົມພັດທະນາການທ່ອງທ່ຽວ
ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

# ຄຳນຳ

ໂດຍອີງໃສ່ການເຕີບໃຫຍ່ຂະຫຍາຍຕົວຢ່າງໄວວາທາງດ້ານເສດຖະກິດ, ຂະບວນການໂລກາພິວັດ ແລະ ການຂະຫຍາຍຕົວຂອງອຸດສາຫະກຳການທ່ອງທ່ຽວໂລກ ທີ່ມີການແຂ່ງຂັນກັນຢ່າງຫຼວງຫຼາຍ. ໃນການນຳໃຊ້ມໍລະດົກທາງດ້ານທຳມະຊາດ ແລະ ວັດທະນະທຳ.

ຈຸດປະສົງຂອງການແປ ແລະ ຮ່າງມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແມ່ນເພື່ອເປັນການສະດວກໃນການຈັດຕັ້ງປະຕິບັດວຽກງານໃນ ສປປ ລາວ ໃຫ້ມີປະສິດທິຜົນ ແລະ ມີປະສິດທິພາບ ແທດເໝາະກັບບັນດາປະເທດສະມະຊິກອາຊຽນ ດັ່ງທີ່ໄດ້ລະບຸໄວ້ໃນແຜນຍຸດທະສາດອາຊຽນ ASEAN Tourism Strategic Plan (ATS) 2016-2025 ເພື່ອສ້າງປະສົບການທີ່ມີຄຸນນະພາບໃຫ້ແກ່ຜູ້ຢ້ຽມຢາມໂດຍສະແດງເຖິງຄວາມອຸດົມສົມບູນຂອງຊັບພະຍາກອນທ້ອງຖິ່ນ, ວິຖີຊີວິດທີ່ເປັນເອກະລັກຂອງປະຊາຊົນລາວບັນດາເຜົ່າ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພ ແລະ ໜ້າສົນໃຈ. ການແປ ແລະ ຈັດພິມປຶ້ມມາດຕະຖານດັ່ງກ່າວແມ່ນຈະຊ່ວຍຍົກສູງຄຸນນະພາບຂອງການບໍລິການ, ປັບປຸງສິ່ງອຳນວຍຄວາມສະດວກ ແລະ ພັດທະນາຊັບພະຍາກອນມະນຸດໃນວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໂດຍການວາງທິດທາງທີ່ມີການບໍລິຫານຈັດການທີ່ດີກວ່າເກົ່າເພື່ອກ້າວໄປສູ່ການຄຸ້ມຄອງໃນລະດັບມືອາຊີບ, ຄວາມຕ້ອງການ, ຄວາມສາມາດ ແລະ ຄວາມຫຼາກຫຼາຍດ້ານວັດທະນະທຳຂອງບັນດາປະເທດສະມາຊິກອາຊຽນ.

ມາດຕະຖານ ແລະ ກົດລະບຽບຕ່າງໆທີ່ນຳໃຊ້ໂດຍບັນດາປະເທດສາມະຊິກອາຊຽນແມ່ນໄດ້ຮັບການຄົ້ນຄ້ວາບັນຫາພື້ນຖານ ແລະ ຊ່ອງຫວ່າງຕ່າງໆຈະໄດ້ຮັບການແກ້ໄຂ. ມາດຕະຖານດັ່ງກ່າວແມ່ນມຸ້ງເປົ້າໃສ່ບັນດາຫຼັກການຕ່າງໆໂດຍສະເພາະແມ່ນ: ການເປັນເຈົ້າພາບທີ່ດີ, ທີ່ພັກອາໃສ, ກິດຈະກຳບໍລິຫານການຄຸ້ມຄອງ, ຄວາມສະອາດ, ຄວາມປອດໄພ, ການຮັກສາຄວາມປອດໄພ, ການຕະຫຼາດ ແລະ ບັນດາຄວາມຍືນຍົງ.

ພະແນກການທ່ອງທ່ຽວແບບອະນຸລັກ, ກົມພັດທະນາການທ່ອງທ່ຽວຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວທີ່ໄດ້ໃຫ້ການສະໜັບສະໜູນດ້ານງົບປະມານເພື່ອແປ, ຮຽບຮຽງ ແລະ ຈັດພິມປຶ້ມມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມນີ້ຂຶ້ນມາ, ຫວັງຢ່າງຍິ່ງວ່າມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນນີ້ຈະເປັນຄູ່ມືນຳໃຊ້ໃຫ້ແກ່ຜູ້ຈັດຕັ້ງປະຕິບັດຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ທັງເປັນເອກະສານຕົວຢ່າງທີ່ປະຊາຊົນທ້ອງຖິ່ນຈະຕ້ອງປະຕິບັດຕາມ ເພື່ອເຮັດໃຫ້ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃນ ສປປ ລາວ ໄດ້ມາດຕະຖານ ແລະ ສ້າງຄວາມປະທັບໃຈໃຫ້ແກ່ຜູ້ທີ່ມາຢ້ຽມຢາມ.

**ຫົວໜ້າກົມພັດທະນາການທ່ອງທ່ຽວ**

**ສາລະບານ**


1. ຮູບແບບ, ນິຍາມ ແລະ ຫລັກການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ..........................1

1.1 ຮູບແບບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ..........................1

1.1.1 ນິຍາມການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ..........................1

1.1.2 ຫຼັກການ-ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ..........................1

2. ຮູບແບບຂອງການປະເມີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ..........................2

2.1 ຈຸດປະສົງ ແລະ ການນໍາໃຊ້ແບບຟອມປະເມີນ..........................2

2.2 ຂອບເຂດຂອງແບບຟອມປະເມີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ..........................2

2.3 ນິຍາມຄໍາສັບ..........................3

2.4 ມາດຖານທີ່ຈໍາເປັນ ກ່ຽວກັບການຢັ້ງຢືນມາດຕະຖານການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມອາຊຽນ.....5

3. ສັງລວມມາດຕະຖານການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ..........................5

4. ຂັ້ນຕອນການຂຶ້ນທະບຽນ, ການຮັບຮອງ ແລະ ການຢັ້ງຢືນ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.......7

5. ການປະເມີນຜົນການຈັດຕັ້ງປະຕິບັດ..........................13

6. ມາດຕະຖານ ແລະ ຕົວຊີ້ວັດການຈັດຕັ້ງປະຕິບັດການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ..........................17

ມາດຖານ 1: ການເປັນເຈົ້າຂອງ ແລະ ການຄຸ້ມຄອງຂອງຊຸມຊົນ..........................17

ມາດຖານ 2: ການປະກອບສ່ວນໃຫ້ສັງຄົມ..........................20

ມາດຖານ 3: ການມີສ່ວນຮ່ວມໃນການອະນຸລັກຮັກສາສະພາບແວດລ້ອມ..........................23

ມາດຖານ 4: ການຊຸກຍູ້ສົ່ງເສີມໃຫ້ມີການແລກປ່ຽນ ລະຫວ່າງ ຊຸມຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ............24

ມາດຖານ 5: ການທ່ອງທ່ຽວ ແລະ ການບໍລິການນໍາທ່ຽວທີ່ມີຄຸນນະພາບ..........................26

ມາດຖານ 6: ຄຸນນະພາບຂອງການບໍລິການອາຫານ ແລະ ເຄື່ອງດື່ມ..........................28

ມາດຖານ 7: ຄຸນນະພາບຂອງສະຖານທີ່ພັກເຊົາ..........................31

ມາດຖານ 8: ການຈັດຕັ້ງປະຕິບັດຂອງບໍລິສັດທ່ອງທ່ຽວ..........................33

ເອກະສານຊ້ອນທ້າຍ 1: ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດ ສໍາລັບສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ..........................39

ເອກະສານຊ້ອນທ້າຍ 2: ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດສໍາລັບພະນັກງານນໍາທ່ຽວຂອງການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ..........................40

ເອກະສານຊ້ອນທ້າຍ 3: ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດ ສໍາລັບຜູ້ປະກອບການອາຫານ ແລະ ເຄື່ອງດື່ມຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ..........................42

ເອກະສານຊ້ອນທ້າຍ 4: ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດຂອງຜູ້ໃຫ້ບໍລິການສະຖານທີ່ພັກເຊົາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ..........................43

ເອກະສານຊ້ອນທ້າຍ 5: ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດ ສໍາລັບຜູ້ປະກອບການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ..........................45

## 1. ຮູບແບບ, ນິຍາມ ແລະ ຫລັກການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.

### 1.1 ຮູບແບບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.

ສາກົນໄດ້ຖືເອົາການທ່ອງທ່ຽວເປັນຂະແໜງເສດຖະກິດໜຶ່ງ ໂດຍພາກທຸລະກິດຂະໜາດນ້ອຍເປັນຜູ້ສະໜອງຜະລິດຕະພັນ ແລະ ການບໍລິການ ໃຫ້ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ. ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນການທ່ອງທ່ຽວຮູບແບບໜຶ່ງ ທີ່ສົ່ງເສີມໃຫ້ຊຸມຊົນທ້ອງຖິ່ນສາມາດຄຸ້ມຄອງການເຕີບໃຫຍ່ຂະຫຍາຍຕົວຂອງການທ່ອງທ່ຽວເຊິ່ງລວມໄປເຖິງການດໍາລົງຊີວິດທີ່ດີ, ການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມແບບຍືນຍົງ. ດັ່ງນັ້ນ, ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈຶ່ງບໍ່ພຽງແຕ່ເປັນການມີສ່ວນຮ່ວມ ລະຫວ່າງ ພາກທຸລະກິດ ແລະ ຊຸມຊົນທີ່ໄດ້ຮັບຜົນປະໂຫຍດທັງສອງຝ່າຍເທົ່ານັ້ນ, ແຕ່ຍັງມີສ່ວນຮ່ວມຂອງຊຸມຊົນ ທີ່ເປັນການກະຕຸກຊຸກຍູ້ໃຫ້ແກ່ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ຊຶ່ງຈະເຮັດໃຫ້ຊຸມຊົນທ້ອງຖິ່ນມີຊີວິດການເປັນຢູ່ທີ່ດີຂຶ້ນ.

ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຍັງເຮັດໃຫ້ຊຸມຊົນທ້ອງຖິ່ນສາມາດກໍານົດ ແລະ ຮັບປະກັນການພັດທະນາເສດຖະກິດ-ສັງຄົມໃນອະນາຄົດໃຫ້ມີຄວາມໝັ້ນຄົງ ໂດຍຜ່ານບັນດາກິດຈະກໍາຕ່າງໆ ເຊັ່ນ: ການຈັດງານບຸນປະເພນີ, ວິຖີຊີວິດ, ການອະນຸລັກຊັບພະຍາກອນທໍາມະຊາດ, ວັດທະນະທໍາ, ການສົ່ງເສີມການມີສ່ວນຮ່ວມໃຫ້ນັກທ່ອງທ່ຽວ ແລະ ຊຸມຊົນທ້ອງຖິ່ນໄດ້ຜົນປະໂຫຍດຮ່ວມກັນ.

ຕາມປົກກະຕິແລ້ວ, ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຍັງສາມາດເຂົ້າເຖິງຕະຫຼາດການທ່ອງທ່ຽວສະເພາະໄດ້ອີກເຊັ່ນ: ການທ່ອງທ່ຽວພະຈົນໄພ, ການທ່ອງທ່ຽວດ້ານວັດທະນະທໍາ, ການທ່ອງທ່ຽວອະນຸລັກ ແລະ ການທ່ອງທ່ຽວດ້ານກະສິກໍາ. ເຖິງແນວໃດກໍ່ຕາມ, ຕ້ອງມີຜະລິດຕະພັນ ແລະ ການບໍລິການຈາກຊຸມຊົນທ້ອງຖິ່ນທັງນີ້ກໍ່ເພື່ອກະຈາຍລາຍໄດ້ ໃຫ້ແກ່ທຸກພາກສ່ວນທີ່ຕິດພັນກັບການທ່ອງທ່ຽວ.

#### 1.1.1 ນິຍາມການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃນ ສປປ ລາວ ແມ່ນກິດຈະກໍາການທ່ອງທ່ຽວໜຶ່ງ ທີ່ຊຸມຊົນທ້ອງຖິ່ນເປັນເຈົ້າຂອງ, ບໍລິຫານ ແລະ ຄຸ້ມຄອງ ຫຼື ປະສານງານຢູ່ຂັ້ນທ້ອງຖິ່ນ ທີ່ຊ່ວຍເຮັດໃຫ້ຊີວິດການເປັນຢູ່ຂອງຊຸມຊົນດີຂຶ້ນ, ອະນຸລັກຮີດຄອງປະເພນີ ແລະ ປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ມໍລະດົກທາງດ້ານວັດທະນະທໍາ.

#### 1.1.2 ຫຼັກການ-ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

ອີງຕາມຄໍານິຍາມທີ່ກ່າວມາຂ້າງເທິງນັ້ນ, ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຕ້ອງ:

1. ເຮັດໃຫ້ຊຸມຊົນມີສ່ວນຮ່ວມ, ເປັນເຈົ້າຂອງ, ບໍລິຫານ ແລະ ຄຸ້ມຄອງດ້ວຍຄວາມໂປ່ງໃສ.
2. ມີການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ.
3. ມີການຮັບຮູ້ ແລະ ຍັ້ງຢືນຈາກອໍານາດການປົກຄອງທີ່ກ່ຽວຂ້ອງ.
4. ປັບປຸງຊີວິດການເປັນຢູ່ ທາງດ້ານສັງຄົມ ແລະ ຮັກສາພາບພົດທີ່ດີໃຫ້ແກ່ຊຸມຊົນ.
5. ສ້າງລະບົບການແບ່ງປັນຜົນປະໂຫຍດ ທີ່ມີຄວາມເປັນທໍາ ແລະ ໂປ່ງໃສ.
6. ສົ່ງເສີມການເຊື່ອມຕໍ່ລະຫວ່າງເສດຖະກິດຂອງທ້ອງຖິ່ນ ເຂົ້າກັບເສດຖະກິດພາກພື້ນ.
7. ເຄົາລົບ, ນັບຖືວັດທະນະທໍາ ແລະ ປະເພນີທ້ອງຖິ່ນ.
8. ປະກອບສ່ວນໃນການປົກປັກຮັກສາຊັບພະຍາກອນທໍາມະຊາດ.
9. ເຮັດໃຫ້ນັກທ່ອງທ່ຽວໄດ້ຮັບປະສົບການທີ່ດີ ໂດຍສົ່ງເສີມໃຫ້ຊຸມຊົນຮູ້ຈັກການຮັບຕ້ອນ ແລະ ສື່ສານກັບແຂກທີ່ດີ.

10. ສາມາດກຸ້ມຕົນເອງທາງດ້ານການເງິນ.

ຫຼັກການເຫຼົ່ານີ້ໄດ້ລວມຢູ່ໃນບັນດາມາດຕະຖານການປະຕິບັດງານທີ່ເຮັດເປັນມາດຖານ, ມາດຖານຍ່ອຍ ແລະ ຕົວຊີ້ວັດຕ່າງໆ.

## 2. ຮູບແບບຂອງການປະເມີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.

### 2.1. ຈຸດປະສົງ ແລະ ການນຳໃຊ້ແບບຟອມປະເມີນ.

ແບບຟອມປະເມີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແມ່ນອີງໃສ່ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ. ຈຸດປະສົງຂອງແບບຟອມປະເມີນນີ້ແມ່ນເພື່ອເຮັດໃຫ້ສາມາດປະເມີນຜົນການຈັດຕັ້ງປະຕິບັດ ແລະ ຜົນສຳເລັດຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຢູ່ໃນພາກພື້ນອາຊຽນ.

ແບບຟອມປະເມີນດັ່ງກ່າວນີ້ສ້າງຂຶ້ນມາເປັນເຄື່ອງມືໃນການປະຕິບັດວຽກງານສຳລັບ ຄະນະຮັບຜິດຊອບການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ, ບັນດາຊຸມຊົນ ແລະ ຜູ້ປະເມີນທີ່ຈະປະເມີນການຈັດຕັ້ງປະຕິບັດຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ການເລືອກເອົາຄຸນວຸທິເພື່ອກຳນົດເປັນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ. ນອກຈາກນັ້ນ, ແບບຟອມປະເມີນດັ່ງກ່າວຍັງໃຊ້ເປັນເຄື່ອງມືຊີ້ງຄະນະກຳມະການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຮ້ານຂາຍເຄື່ອງທີ່ລະນຶກສາມາດນຳໃຊ້ເພື່ອເປັນການທົດສອບຕົນເອງເພື່ອລະບຸສິ່ງທີ່ຈະເກີດຂຶ້ນໃນໄວໆນີ້ ແລະ ໃຊ້ມາດຕະການທີ່ຈຳເປັນເພື່ອປັບປຸງຄຸນນະພາບຂອງການດຳເນີນງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

### 2.2. ຂອບເຂດຂອງແບບຟອມປະເມີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.

ມາດຕະຖານ ແລະ ແບບຟອມປະເມີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ມີຕົວຊີ້ວັດການຈັດຕັ້ງປະຕິບັດລວມສຳລັບ ການຄຸ້ມຄອງຜະລິດຕະພັນການທ່ອງທ່ຽວແບບທີ່ສະເໜີໂດຍຊຸມຊົນຕ່າງໆ ພາຍໃຕ້ການດຳເນີນງານຂອງຄະນະກຳມະການປະເມີນຜົນມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ. ມາດຕະຖານຜະລິດຕະພັນສະເພາະໄດ້ຮັບຮອງໂດຍອາຊຽນ ແລະ ກ່ຽວຂ້ອງກັບວຽກງານການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ (ຕົວຢ່າງ: ມາດຕະຖານເຮືອນພັກແຮມປະຊາຊົນ) ເປັນພາກສ່ວນທີ່ສຳຄັນຂອງມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

ຈຸດປະສົງຂອງມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແມ່ນໄດ້ລວມເອົາບັນດາຊຸມຊົນຕ່າງໆໃນຂົງເຂດອາຊຽນ ເພື່ອຮັບຮອງເອົາມາດຕະຖານການທ່ອງທ່ຽວປະຊາຊົນມີສ່ວນຮ່ວມອາຊຽນ ກ່ຽວກັບຄຸນນະພາບຂອງການບໍລິການທີ່ຈຳເປັນເພື່ອຮັບປະກັນໃຫ້ນັກທ່ອງທ່ຽວທີ່ຄາດຫວັງດ້ານຄຸນນະພາບ ແລະ ການບໍລິການເທົ່າກັນທົ່ວອາຊຽນ ທີ່ໄດ້ຜ່ານການຮັບຮອງມາດຕະຖານປະຊາຊົນມີສ່ວນຮ່ວມແບບອາຊຽນ.





## 2.3. ນິຍາມຄຳສັບ.

| | |
|---|---|
| ຫຼັກການປະເມີນຜົນ | ຫຼັກການຂອງການປະເມີນ ໝາຍເຖິງຫຼັກການຫຼັກ ແລະ ຫຼັກການຍ່ອຍຂອງສະພາບການ ຫລື ຜົນໄດ້ຮັບຈາກການທ່ອງທ່ຽວປະຊາຊົນມີສ່ວນຮ່ວມການບັນລຸເຖິງຫຼັກການຫຼັກ ຫຼື ຫຼັກການຍ່ອຍແມ່ນໄດ້ຈາກຕົວຊີ້ວັດການປະເມີນຜົນຂອງບັນດາຕົວຊີ້ວັດແມ່ນຂຶ້ນກັບການຕັດສິນ ຈາກການຈັດຕັ້ງປະຕິບັດ. |
| ສະຖານທີ່ພັກເຊົາຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ຫຼັງຄາເຮືອນພາຍໃນຂົງເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ທີ່ນັກທ່ອງທ່ຽວສາມາດນຳໃຊ້ໄດ້. |
| ຜູ້ບໍລິການສະຖານທີ່ພັກເຊົາຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ບັນດາສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຜູ້ທີ່ສະໜອງການບໍລິການສະຖານທີ່ພັກແຮມ ເຊັ່ນ: ເຮືອນພັກແຮມປະຊາຊົນສຳລັບນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມຂົງເຂດການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ ແລະ ຜູ້ທີ່ມີພັນທະຕໍ່ກັບລະບຽບສຳລັບຜູ້ໃຫ້ບໍລິການສະຖານທີ່ພັກແຮມຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ (ເອກະສານຊ້ອນທ້າຍທີ 4). |
| ອົງການທີ່ຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ອົງການໃດໜຶ່ງຢູ່ໃນແຕ່ລະປະເທດອາຊຽນ ທີ່ຮັບຜິດຊອບໂດຍລັດຖະບານ ເພື່ອເປັນການສະໜັບສະໜູນ ການບໍລິຫານ ແລະ ການປະເມີນກິດຈະກຳ ການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ. ອົງການນີ້ອາດຈະເປັນອົງການຂອງລັດທີ່ຮັບຜິດຊອບວຽກງານທ່ອງທ່ຽວ ຫຼື ຂະແໜງການທ່ອງທ່ຽວ. |
| ສູນບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ໝາຍເຖິງພື້ນທີ່ໃດໜຶ່ງ ຫລື ອາຄານໃດໜຶ່ງ ທີ່ໃຊ້ເພື່ອຕ້ອນຮັບນັກທ່ອງທ່ຽວ ແລະ ບໍລິຫານວຽກງານຂອງການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ. |
| ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ໝາຍເຖິງຄະນະກຳມະການທີ່ຄຸ້ມຄອງ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໃນແຕ່ລະໄລຍະທີ່ຄັດເລືອກຈາກສະມາຊິກພາຍໃນຊຸມຊົນນັ້ນໆ ເພື່ອເປັນຕົວແທນໃຫ້ແກ່ເຂົາເຈົ້າ ໃນການເລີ່ມຕົ້ນການພັດທະນາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມເປັນຕົ້ນແມ່ນການປະສານງານ ແລະ ການຈັດການ ກິດຈະກຳຕ່າງໆ. |
| ຜູ້ປະກອບການອາຫານ ແລະ ເຄື່ອງດື່ມ ຂອງການທ່ອງທ່ຽວແບບປະ<br>ຊາຊົນມີສ່ວນຮ່ວມ | ບັນດາສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຜູ້ທີ່ໃຫ້ບໍລິການອາຫານ ແລະ ເຄື່ອງດື່ມໃຫ້ແກ່ນັກທ່ອງທ່ຽວ ໃນພື້ນທີ່ນັ້ນໆ ແລະ ເປັນຜູ້ທີ່ສັນຍາວ່າ ຈະສະໜອງອາຫານ ແລະ ເຄື່ອງດື່ມທີ່ສະອາດ ແລະ ປອດໄພຕາມມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ. (ເອກະສານຊ້ອນທ້າຍ3). |
| ຜູ້ປະກອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ຜູ້ປະກອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມແມ່ນຜູ້ທີ:<br>(1) ນຳພານັກທ່ອງທ່ຽວມາທ່ຽວຊົມພື້ນທີ່,<br>(2) ຜູ້ໃຫ້ການສາທິດຕ້ອງເອົາໃຈໃສ່ ໃນການອະນຸລັກທຳມະຊາດວັດທະນະທຳໃຫ້ມີຄວາມຍືນຍົງໃນພື້ນທີ່.<br>(3) ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ຂອງຊຸມຊົນທ້ອງຖິ່ນ ແລະ ເປັນຜູ້ທີ່ໃຫ້ສັນຍາໃນການຈັດຕັ້ງປະຕິບັດມາດຕະຖານການທ່ອງທ່ຽວປະຊາຊົນມີສ່ວນຮ່ວມອາຊຽນ ສຳລັບບໍລິສັດທ່ອງທ່ຽວ (ເອກະສານຊ້ອນທ້າຍທີ 5). |
| ການເລີ່ມຕົ້ນວຽກງານການທ່ອງ | ທຸກກິດຈະກຳ ຫລື ກຸ່ມປະຕິບັດງານທີ່ໃຫ້ບໍລິການນຳທ່ຽວ ແລະ ຈັດ |

| | |
|---|---|
| ທ່ຽວແບບປະຊາຊົນມີສ່ວນຮ່ວມ | ກິດຈະກຳຕ່າງໆ ແລະ ການດຳເນີນງານໂດຍບັນດາປະເທດສະມາຊິກການທ່ອງທ່ຽວແບບອະນຸລັກ ແລະ ໄດ້ຮັບການແຕ່ງຕັ້ງຈາກກົດລະບຽບການໃຊ້ຂໍ້ບັງຄັບມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ. |
| ພະນັກງານນຳທ່ຽວຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ສະມາຊິກພາຍໃນຊຸມຊົນທີ່ຈັດກິດຈະກຳຕ່າງໆໃຫ້ແກ່ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຜູ້ທີ່ໄດ້ຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ. |
| ສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ສະມາຊິກຂອງຊຸມຊົນທີ່ເຂົ້າຮ່ວມເຮັດກິດຈະກຳ ຂອງຄະນະກຳມະການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ແມ່ນຜູ້ທີ່ມີພັນທະຕໍ່ກັບລະບຽບສຳລັບສະມາຊິກ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ (ເອກະສານຊ້ອນທ້າຍ1) |
| ພາກສ່ວນທີ່ກ່ຽວຂ້ອງກັບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ບຸກຄົນ, ນິຕິບຸກຄົນ ຫລື ອົງກອນໃດໜຶ່ງ ທີ່ມີຜົນຕໍ່ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. |
| ຫຼັກການ | ໝາຍເຖິງຜົນທີ່ໄດ້ຮັບ ຫລື ເງື່ອນໄຂຂອງການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. ຫຼັກການແບ່ງອອກເປັນຫຼັກການຍ່ອຍເພື່ອຊຸກຍູ້ບັນດາຈຸດປະສົງ ຫລື ເງື່ອນໄຂທີ່ຈຳເປັນເພື່ອໃຫ້ໄດ້ຕາມຈຸດປະສົງທີ່ຕ້ອງການ. |
| ລະດັບຂອງການຈັດຕັ້ງປະຕິບັດຕາມ | ໝາຍເຖິງລະດັບຂອງການບັນລຸຕົວຊີ້ວັດ |
| ຫລັກຖານ | ຕົວຊີ້ວັດຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທີ່ບັນລຸໄດ້. ຫລັກຖານອາດລວມມີມາດຕະຖານດ້ານປະລິມານ (ເຊັ່ນ: ລະດັບຂອງຜົນກຳໄລທີ່ກຳນົດຢູ່ໃນໃບຢັ້ງຢືນການເງິນ) ມາດຕະຖານດ້ານຄຸນນະພາບ (ເຊັ່ນ: ລະດັບການສົ່ງເສີມຂອງຊຸມຊົນທີ່ອາດຊ່ວຍຊຸກຍູ້ການຢູ່ຫລອດຂອງສັງຄົມຂອງກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ) |
| ອົງການຈັດຕັ້ງລັດ ທີ່ຢູ່ໃນຂະແໜງການທ່ອງທ່ຽວ | ອົງການຈັດຕັ້ງສູງສຸດທີ່ຮັບຜິດຊອບວຽກງານທ່ອງທ່ຽວຂອງປະເທດສະມາຊິກອາຊຽນ ເຊັ່ນ: ກະຊວງ, ກົມ, ສະຖາບັນ. |
| ຕົວຊີ້ວັດ | ເງື່ອນໄຂທີ່ສະທ້ອນໃຫ້ເຫັນມາດຖານ ຫລື ມາດຖານຍ່ອຍຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ |
| ຜູ້ປະເມີນຜົນອິດສະຫຼະ | ຜູ້ທີ່ຖືກແຕ່ງຕັ້ງຈາກໜ່ວຍງານຮັບຜິດຊອບວຽກງານການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ, ແຕ່ບໍ່ໄດ້ມາຈາກລັດຖະບານ, ແຕ່ງຕັ້ງມາສະເພາະຈຸດປະສົງຂອງການປະເມີນຜົນການທ່ອງທ່ຽວປະຊາຊົນມີສ່ວນຮ່ວມທີ່ປະຕິບັດຕາມມາດຕະຖານ<br>ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ. ຜູ້ປະເມີນຜົນອິດສະຫລະນີ້ອາດແມ່ນຜູ້ຕາງໜ້າຈາກອຸດສາຫະກຳການທ່ອງທ່ຽວ, ຈາກສະຖາບັນການສຶກສາ, ສະມາຊິກຄະນະກຳມະການການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ ຈາກການທ່ອງທ່ຽວປະຊາຊົນມີສ່ວນຮ່ວມທີ່ໄດ້ຮັບອະນຸມັດແລ້ວ ຫລື ບຸກຄົນໃດກໍຕາມທີ່ຮັບຮູ້ຈາກໜ່ວຍງານຮັບຜິດຊອບວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ທີ່ມີປະສົບການພຽງພໍໃນການໃຫ້ຄຳແນະນຳ. ຜູ້ປະເມີນອິດສະຫລະຄວນມີຄຸນວຸດທິທີ່ກ່ຽວຂ້ອງກັບ |

| | |
|---|---|
| | ການທ່ອງທ່ຽວ ແລະ ຢ່າງໜ້ອຍມີປະສົບການຈາກຂະແໜງການທ່ອງທ່ຽວ 10 ປີ. ຜູ້ປະເມີນຜົນອິດສະຫຼະຈະຈັດການຝຶກອົບຮົມ ກ່ຽວກັບມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແລະ ຂັ້ນຕອນການຢັ້ງຢືນ. ຜູ້ປະເມີນຜົນອິດສະຫລະອາດໄດ້ຮັບການຊ່ວຍເຫລືອ ຈາກຜູ້ຕາງໜ້າລັດຖະບານ ເພື່ອຮັບປະກັນທາງດ້ານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການນຳໃຊ້ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນຕາມຄວາມເໝາະສົມ. |
| ຕົວວັດແທກ | ບາງສິ່ງທີ່ສະທ້ອນໃຫ້ເຫັນສະພາວະຂອງຕົວຊີ້ວັດ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. ຫລັກການວັດແທກອາດເປັນປະລິມານ ຫລື ຄຸນນະພາບ (ເຊັ່ນ: ຄຸນນະພາບ ແລະ ຂອບເຂດຂອງລະບົບ ແລະ ຂັ້ນຕອນໃນການຮັບປະກັນການຄຸ້ມຄອງທີ່ມີປະສິດທິພາບ) |

### 2.4 ມາດຖານທີ່ຈຳເປັນ ກ່ຽວກັບການຢັ້ງຢືນມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.

ສຳລັບວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໃນພາກພື້ນອາຊຽນ ຈະຕ້ອງໄດ້ຜ່ານການຢັ້ງຢືນ ແລະ ປະເມີນຜົນ ເຊິ່ງຕ້ອງໃຫ້ໄດ້ຕາມເງື່ອນໄຂດັ່ງລຸ່ມນີ້:

ກ. ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕ້ອງຖືກຄັດເລືອກໃຫ້ມາເປັນຕົວແທນໃຫ້ແກ່ຊຸມຊົນ ແລະ ປະສານງານການຈັດຕັ້ງປະຕິບັດກິດຈະກຳຕ່າງໆຢູ່ພາຍໃນຊຸມຊົນນັ້ນ;

ຂ. ສະມາຊິກຄະນະຮັບຜິດຊອບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະຕ້ອງເປັນບຸກຄົນທີ່ບໍ່ເຄີຍຖືກຕ້ອງຄະດີໃດໆມາກ່ອນ;

ຄ. ວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມລວມມີ: ສະມາຊິກ ແລະ ອະນຸກຳມະການທີ່ຮັບຜິດຊອບການບໍລິການ ແລະ ຜະລິດຕະພັນການທ່ອງທ່ຽວ ທີ່ໄດ້ລະບຸໄວ້ນັ້ນ.

ງ. ຄະນະກຳມະການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະຕ້ອງສຳເລັດການປະເມີນຕົນເອງ (ນຳໃຊ້ແບບກວດສອບນີ້);

ຈ. ວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໄດ້ລົງທະບຽນກັບໜ່ວຍງານທີ່ຮັບຜິດຊອບວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຂອງປະເທດທີ່ໄດ້ຮັບການມອບໝາຍ ອີງຕາມການປະເມີນຜົນຕົນເອງ;

ສ. ພາຍຫຼັງທີ່ໄດ້ມີການລົງທະບຽນ ຫລື ໄດ້ຈັດຕັ້ງປະຕິບັດວຽກງານຢ່າງໜ້ອຍ 1 ປີ;

ຊ. ຮັບຮອງມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະຕ້ອງໄດ້ຜ່ານການປະເມີນ ແລະ ຢັ້ງຢືນ ໂດຍໜ່ວຍງານທີ່ຮັບຜິດຊອບວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

## 3. ສັງລວມມາດຕະຖານການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

ເພື່ອປະເມີນຄຸນນະພາບ ແລະ ການຈັດຕັ້ງປະຕິບັດບັນດາມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ໄດ້ສ້າງເປັນແບບກວດສອບ ຊຶ່ງມີ 8 ມາດຕະຖານຫຼັກ, 23 ມາດຖານຍ່ອຍ ແລະ 171 ຕົວຊີ້ວັດ. ໃນນີ້ຕົວຊີ້ວັດຈຳນວນ 89 ຕົວ ແມ່ນມາດຕະຖານຕ່ຳສຸດ, 52 ຕົວແມ່ນມາດຕະຖານດີ ແລະ 30 ຕົວແມ່ນມາດຕະຖານດີທີ່ສຸດ (ຢູ່ໃນຕາຕະລາງທີ 1). ບັນດາຕົວຊີ້ວັດເຫລົ່ານີ້ແມ່ນນຳໃຊ້ຢູ່ໃນຂະບວນການຢັ້ງຢືນຂອງອາຊຽນ ຊຶ່ງຄາດໄວ້ວ່າມາດຕະຖານການທ່ອງທ່ຽວປະຊາຊົນມີສ່ວນຮ່ວມອາຊຽນ ຈະສອດຄ່ອງ ແລະ ເໝາະສົມກັບທຸກມາດຕະຖານໃນຕໍ່ໜ້າ.

ຕາຕະລາງທີ 1: <u>ສັງລວມບັນດາມາດຖານ ແລະ ຕົວຊີ້ວັດສໍາລັບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.</u>

| ມາດຕະຖານ | ມາດຕະຖານຍ່ອຍ | ຕົວຊີ້ວັດ | | | |
|---|---|---|---|---|---|
| | | ມາດຕະຖານ ຕໍ່າສຸດ | ມາດຕະຖານ ດີ | ມາດຕະຖານ ດີທີ່ສຸດ | ລວມ |
| 1. ການເປັນເຈົ້າຂອງ ແລະ ການຄຸ້ມຄອງຂອງຊຸມຊົນ | 1.1 ລະບົບການຄຸ້ມຄອງມີປະສິດທິພາບ ແລະ ມີຄວາມໂປ່ງໃສ | 5 | 2 | 0 | 7 |
| | 1.2 ມີກົດໝາຍຮັບຮອງ | 2 | 0 | 0 | 2 |
| | 1.3 ການຄຸ້ມຄອງທີ່ມີປະສິດທິພາບ ແລະ ມີຄວາມໂປ່ງໃສ | 5 | 2 | 1 | 8 |
| | 1.4 ມີການຮ່ວມມືຢ່າງມີປະສິດທິພາບ | 2 | 2 | 1 | 5 |
| | ລວມ | 14 | 6 | 2 | 22 |
| 2. ການປະກອບສ່ວນໃຫ້ ສັງຄົມ. | 2.1 ຮັກສາພາບພົດຂອງບຸກຄະລາກອນເອົາໄວ້ | 2 | 1 | 1 | 4 |
| | 2.2 ການແບ່ງປັນລາຍຮັບ, ລາຍຈ່າຍ ເທົ່າທຽມກັນ | 1 | 1 | 1 | 3 |
| | 2.3 ການເຊື່ອມໂຍງສິ່ງທີ່ມີກັບເສດຖະກິດພາກພື້ນ | 2 | 1 | 1 | 4 |
| | 2.4 ການຮັກສາວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມ | 3 | 2 | 1 | 6 |
| | ລວມ | 8 | 5 | 4 | 17 |
| 3. ການປະກອບສ່ວນໃນການອະນຸລັກ ແລະ ຮັກສາສິ່ງແວດລ້ອມ. | 3.1 ຊັບພະຍາກອນທໍາມະຊາດໄດ້ຮັບການອະນຸລັກ | 1 | 2 | 1 | 4 |
| | 3.2 ວຽກງານການອະນຸລັກ ເພື່ອປົກປັກຮັກສາສິ່ງແວດລ້ອມ | 4 | 1 | 2 | 7 |
| | ລວມ | 5 | 3 | 3 | 11 |
| 4. ການຊຸກຍູ້ສົ່ງເສີມໃຫ້ມີການແລກປ່ຽນລະຫວ່າງຊຸມຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ. | 4.1 ການແລກປ່ຽນລະຫວ່າງນັກທ່ອງທ່ຽວ ແລະ ຊຸມຊົນທ້ອງຖິ່ນ. | 2 | 3 | 3 | 8 |
| | 4.2 ຄວາມຍືນຍົງຂອງຜະລິດຕະພັນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | 1 | 1 | 3 | 5 |
| | ລວມ | 3 | 4 | 6 | 13 |
| 5. ການທ່ອງທ່ຽວ ແລະ ການບໍລິການນໍາທ່ຽວທີ່ມີຄຸນນະພາບ. | 5.1 ຮັບປະກັນຄຸນນະພາບ ແລະ ຄວາມຊໍານານຂອງພະນັກງານນໍາທ່ຽວ | 3 | 2 | 1 | 6 |
| | 5.2 ການຈັດລາຍການທ່ອງທ່ຽວ ແລະ ກິດຈະກໍາຕ່າງໆເພື່ອໃຫ້ມີຄຸນນະພາບ | 5 | 4 | 4 | 13 |
| | ລວມ | 8 | 6 | 5 | 19 |
| 6. ການບໍລິການອາຫານ ແລະ ເຄື່ອງດື່ມທີ່ມີຄຸນນະພາບ. | 6.1 ຮັບປະກັນຄຸນນະພາບຂອງຜູ້ປະກອບການອາຫານ ແລະ ເຄື່ອງດື່ມ | 3 | 2 | 1 | 6 |
| | 6.2 ການບໍລິການອາຫານ ແລະ ເຄື່ອງດື່ມໃຫ້ມີຄຸນນະພາບ | 12 | 3 | 1 | 16 |
| | ຕົວລວມ | 15 | 5 | 2 | 22 |

| | | | | | |
|---|---|---|---|---|---|
| 7. ຄຸນນະພາບຂອງສະຖານທີ່ພັກເຊົາ. | 7.1 ຮັບປະກັນຄຸນນະພາບຂອງຜູ້ປະກອບການສະຖານທີ່ພັກເຊົາ | 4 | 1 | 1 | 6 |
| | 7.2 ຮັບປະກັນຄຸນນະພາບຂອງສະຖານທີ່ພັກເຊົາ | 16 | 10 | 1 | 27 |
| | ລວມ | 20 | 11 | 2 | 33 |
| 8. ການຈັດຕັ້ງປະຕິບັດຂອງບໍລິສັດທ່ອງທ່ຽວ. | 8.1 ພັນທະຕໍ່ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທີ່ດີ | 5 | 2 | 2 | 9 |
| | 8.2 ປະກອບສ່ວນຕໍ່ຊຸມຊົນ ແລະ ການປົກປັກຮັກສາທຳມະຊາດ | 4 | 5 | 2 | 11 |
| | 8.3 ສົ່ງເສີມເສດຖະກິດທ້ອງຖິ່ນ | 2 | 1 | 1 | 4 |
| | 8.4 ໂຄສະນາ ລາຍການທ່ອງທ່ຽວ, ຄວາມຮູ້ ແລະ ປະສົບການທ້ອງຖິ່ນ | 3 | 2 | 0 | 5 |
| | 8.5 ການສ້າງຄວາມເພິ່ງພໍໃຈ ແລະ ຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ແລະ ຊຸມຊົນ | 2 | 2 | 1 | 5 |
| | ລວມ | 16 | 12 | 6 | 34 |
| | ລວມ | 89 | 52 | 30 | 171 |

## 4. ຂັ້ນຕອນການຂຶ້ນທະບຽນ, ການຮັບຮອງ ແລະ ການຢັ້ງຢືນ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

ການສະໝັກເປັນມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕ້ອງມີການລົງທະບຽນ ແລະ ຮັບຮອງຈາກໜ່ວຍງານທີ່ຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຢູ່ໃນປະເທດນັ້ນໆ ແລະ ການຢັ້ງຢືນ ແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງອາຊຽນ ໂດຍຜ່ານກະຊວງ ຫຼື ອົງການທ່ອງທ່ຽວແຫ່ງຊາດ (ຮູບພາບທີ 1). ແຕ່ລະຂັ້ນຕອນແນໃສ່ເພື່ອຊຸກຍູ້ການຮຽນຮູ້ ແລະ ປັບປຸງການປະຕິບັດວຽກງານໄປພ້ອມໆກັນ. ແຕ່ລະອົງປະກອບມີການປະເມີນຜົນການຈັດຕັ້ງປະຕິບັດ ແລະ ຕົວຊີ້ວັດຂອງມາດຖານ; ຖ້າຢາກບັນລຸເປົ້າໝາຍດັ່ງກ່າວ, ຕ້ອງເຮັດໃຫ້ວຽກງານການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ ສອດຄ່ອງກັບມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ. ການປະເມີນຜົນອາດເຮັດໄດ້ດ້ວຍຕົນເອງ ຫຼື ຜ່ານຜູ້ປະເມີນຜົນຈາກພາຍນອກກໍ່ໄດ້. ອົງປະກອບຫລັກຂອງຂະບວນການດັ່ງກ່າວແມ່ນສະມາຊິກໃນຊຸມຊົນ (ແລະ ພາກສ່ວນອື່ນໆ) ໃຫ້ສອດຄ່ອງກັບລະບຽບໃນການຈັດຕັ້ງປະຕິບັດຕ່າງໆ. ສິ່ງເຫລົ່ານີ້ສະແດງໃຫ້ເຫັນເຖິງ ພຶດຕິກຳຂອງອົງປະກອບແຕ່ລະຕົວຄວນປະຕິບັດໃຫ້ໄດ້ຕາມມາດຕະຖານຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.






**ຮູບພາບທີ 1: ສັງລວມບັນດາຂັ້ນຕອນການຍັ້ງຍືນ ວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ທີ່ໄດ້ຕາມ ມາດຕະຖານການ ທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.**

- ### ຂັ້ນຕອນການຂຶ້ນທະບຽນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໄດ້ລົງທະບຽນຢ່າງເປັນທາງການ ຈາກຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຂອງປະເທດໃດໜຶ່ງ ເພື່ອຮັບຮອງເອົາວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໂດຍໃຫ້ໄດ້ມາດຖານຕໍ່າສຸດບໍ່ໃຫ້ຫລຸດ 60% ແລະ ມາດຖານສູງສຸດຈາກຕົວຊີ້ວັດສໍາລັບແຕ່ລະມາດຖານ (ຮູບພາບທີ 2). ຂັ້ນຕອນການຂຶ້ນທະບຽນກ່ອນ ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຂັ້ນທ້ອງຖິ່ນຕ້ອງປະເມີນຜົນກິດຈະກໍາ ໂດຍການສົມທົບກັບຄະນະຮັບຜິດຊອບຂັ້ນສູນກາງ. ຖ້າຫາກມີການບໍລິການຫລາຍຢ່າງຢູ່ໃນຊຸມຊົນ ເຊັ່ນ:ເຮືອນພັກແຮມປະຊາຊົນ ແລະ ການນໍາທ່ຽວໃນຊຸມຊົນຕ້ອງໃຫ້ໄດ້ຄົບຕາມມາດຖານຄື 60% ຂຶ້ນໄປ. ສໍາລັບກິດຈະກໍາທີ່ໃຫ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມມາກ່ອນແລ້ວ ກໍ່ສາມາດສະເໜີເພື່ອຂໍຂຶ້ນທະບຽນໃນການຈັດຕັ້ງປະຕິບັດຖ້າຫາກວ່າໄດ້ຄົບຕາມເງື່ອນໄຂທີ່ກ່າວມາຂ້າງເທິງນັ້ນ.




**ຮູບພາບທີ 2: ຂັ້ນຕອນການຂຶ້ນທະບຽນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ**

## ➢ ຂັ້ນຕອນການຮັບຮອງເອົາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.

ຂັ້ນຕອນການຮັບຮອງເອົາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ ໄດ້ຖືກຮັບຮອງເອົາຈາກຄະນະຮັບຜິດຊອບການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ ຈາກສູນກາງຂອງປະເທດນັ້ນໆ ເພື່ອສະເໜີຂໍໃບຍັ້ງຢືນມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ຖ້າຫາກວ່າໄດ້ຕາມມາດຖານຕໍ່າສຸດ 60% ຂຶ້ນໄປ ແລະ ມາດຖານສູງສຸດແມ່ນ 50% ຂຶ້ນໄປ ໂດຍອີງໃສ່ຕົວຊີ້ວັດໃນແຕ່ລະມາດຖານ (ຮູບພາບທີ 3). ຂັ້ນຕອນການຂໍຮັບຮອງນັ້ນກ່ອນອື່ນແມ່ນ ທາງຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ເຮັດການປະເມີນຜົນກິດຈະກຳໂດຍການສົມທົບກັບຄະນະຮັບຜິດຊອບຂັ້ນສູນກາງ ແລະ ການປະເມີນນັ້ນແມ່ນປະເມີນສະພາບໂດຍລວມ. ແຕ່ເຖິງຢ່າງໃດກໍຕາມ ຖ້າຫາກກິດຈະກຳທີ່ໃຫ້ບໍລິການຢູ່ໃນຊຸມຊົນປະກອບມີຫຼາຍກິດຈະກຳເຊັ່ນ: ເຮືອນພັກແຮມປະຊາຊົນ ແລະ ການນຳທ່ຽວໃນຊຸມຊົນ, ແຕ່ລະກິດຈະກຳທີ່ໃຫ້ບໍລິການຈະຕ້ອງໃຫ້ໄດ້ຄົບຕາມມາດຖານຕໍ່າສຸດ 60% ຂຶ້ນໄປ ແລະ ມາດຖານສູງສຸດແມ່ນ 50% ຂຶ້ນໄປ.




**ຮູບພາບທີ 3: ຂັ້ນຕອນການຮັບຮອງເອົາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ**

- ### ຂັ້ນຕອນການຢັ້ງຢືນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ

ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໄດ້ຮັບການຢັ້ງຢືນຈາກໜ່ວຍງານ ທີ່ຮັບຜິດຊອບການທ່ອງທ່ຽວຂອງລັດຖະບານຕາມການແນະນຳ ຂອງຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຂັ້ນສູນກາງ ແລະ ການປະເມີນຜົນຕ້ອງສອດຄ່ອງກັບມາດຕະຖານ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຂອງອາຊຽນ ຊຶ່ງໄດ້ກວມເອົາທຸກໆວຽກງານຂອງການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ (ຮູບພາບທີ 4). ຜູ້ປະເມີນຜົນອິດສະລະ ແລະ ຜູ້ຕາງໜ້າຈາກຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຂັ້ນສູນກາງ ດຳເນີນການປະເມີນກິດຈະກຳໂດຍສົມທົບກັບຄະນະຮັບຜິດຊອບຂັ້ນທ້ອງຖິ່ນພ້ອມກັບລາຍງານ ແລະ ຂໍທິດຊີ້ນຳຈາກຄະນະຂັ້ນສູນກາງ.

ພ້ອມກັນນັ້ນ, ບົດລາຍງານການປະເມີນຜົນກໍຈະສົ່ງໃຫ້ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຂັ້ນທ້ອງຖິ່ນ. ຖ້າການຈັດຕັ້ງປະຕິບັດໄດ້ຄົບຕາມເງື່ອນໄຂພື້ນຖານ 70% ຂຶ້ນໄປ ແລະ 60% ຂຶ້ນໄປຂອງເງື່ອນໄຂສູງສຸດ. ການປະເມີນຜົນໄດ້ນຳໃຊ້ຢູ່ໃນຂັ້ນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມແບບລວມໝູ່, ບໍ່ແມ່ນເຮັດໃຜເຮັດມັນ. ເຖິງແນວໃດກໍຕາມ, ຖ້າມີການບໍລິການຫລາຍຢ່າງເຊັ່ນ: ເຮືອນພັກແຮມປະຊາຊົນ, ບໍລິການນຳທ່ຽວໃນຊຸມຊົນ, ໃນນີ້ຕ້ອງໃຫ້ໄດ້ມາດຖານເງື່ອນໄຂພື້ນຖານ 70% ຂຶ້ນໄປ ແລະ 60% ຂຶ້ນໄປຂອງເງື່ອນໄຂສູງສຸດ.

ຜູ້ປະເມີນຜົນອິດສະຫຼະອາດມາຈາກໜ່ວຍງານອຸດສາຫະກຳການທ່ອງທ່ຽວ, ສະຖາບັນການສຶກສາ, ສະມາຊິກຄະນະກຳມະການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຈາກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທີ່ໄດ້ຮັບການຢັ້ງຢືນມາກ່ອນ ຫຼື ບຸກຄົນໃດກໍໄດ້ທີ່ເປັນທີ່ຍອມຮັບຈາກອົງການທ່ອງທ່ຽວຂອງລັດ ທີ່ມີຄວາມຮູ້ຄວາມສາມາດ ແລະ ມີປະສົບການກ່ຽວກັບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.






**ຮູບພາບທີ 4: ຂັ້ນຕອນການອອກໃບຢັ້ງຢືນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.**

## 5. ການປະເມີນຜົນການຈັດຕັ້ງປະຕິບັດ.

### ➢ ຫຼັກຖານອີງໃສ່ຜົນການປະເມີນ.

ການປະເມີນຜົນ ແມ່ນອີງໃສ່ຫຼັກຖານ ໝາຍຄວາມວ່າຕ້ອງມີຫລັກຖານຢືນຢັນວ່າຕົວຊີ້ວັດນັ້ນໄດ້ຕາມລະດັບຄາດໝາຍ. ເນື່ອງຈາກວ່າ ຕົວຊີ້ວັດຫລາຍຕົວມີການປະເມີນຜົນອັດຕະໂນມັດ ເປັນຕົວເສີມໃນການປະເມີນ. ການປະເມີນຜົນແມ່ນຂຶ້ນຢູ່ກັບຄວາມເໝາະສົມຂອງຕົວຊີ້ວັດດັ່ງກ່າວ.

### ➢ ຮູບແບບຂອງຫລັກຖານ.

| | |
|---|---|
| ເອກະສານ | ຫຼັກຖານທີ່ເປັນເອກະສານເຊັ່ນ: ແຜນການ, ບົດລາຍງານ, ບົດບັນທຶກກອງປະຊຸມ, ລະບຽບປະຕິບັດງານທີ່ໄດ້ເຊັນແລ້ວ, ຂັ້ນຕອນຕ່າງໆ, ບົດລາຍງານການເງິນ. |
| ການສັງເກດການ | ຫຼັກຖານຈາກການສັງເກດການໄດ້ແກ່: ການເຂົ້າຮ່ວມກອງປະຊຸມ, ການມີສ່ວນຮ່ວມນຳລາຍການນຳທ່ຽວ ຫລື ກິດຈະກຳທ່ອງທ່ຽວ ເຊິ່ງຫຼັກຖານຈາກການສັງເກດການຫລາຍຢ່າງອາດຈະເອົາຮູບພາບມາປະກອບເພື່ອຢັ້ງຢືນ. |
| ການສຳພາດ | ຫຼັກຖານຈາກການສຳພາດ ແມ່ນໄດ້ຈາກການສຳພາດຈາກຫຼາຍໆຄົນທີ່ຢືນຢັນວ່າ ແມ່ນໄດ້ປະ ສົບຄວາມສຳເລັດແທ້. ຂໍ້ເທັດຈິງຂອງຂໍ້ມູນແມ່ນໄດ້ຮັບການຢືນຢັນຈາກແບບສຳພາດຕ່າງໆ. |
| ຮູບພາບ | ຫຼັກຖານທີ່ເປັນຮູບພາບແມ່ນສາມາດຢັ້ງຢືນໃຫ້ແກ່ການສັງເກດການຕ່າງໆພ້ອມກັນນັ້ນຮູບພາບແມ່ນມີຄວາມສຳຄັນຫຼາຍໃນການບັນທຶກການຈັດຕັ້ງປະຕິບັດກິດຈະກຳຕ່າງໆ. |

### ➢ ລະດັບຂອງການປະຕິບັດຕາມຕົວຊີ້ວັດ.

ຕົວຊີ້ວັດໄດ້ປະເມີນຜົນການຈັດຕັ້ງປະຕິບັດໂດຍແບ່ງອອກເປັນ 3 ລະດັບເຊັ່ນ: ໄດ້ຄົບມາດຖານ, ໄດ້ມາດຖານບາງສ່ວນ, ບໍ່ໄດ້ມາດຖານ ຫລື ໃຊ້ການບໍ່ໄດ້

| | |
|---|---|
| ໄດ້ຄົບມາດຖານ | ມີຫຼັກຖານທີ່ຄົບຖ້ວນທີ່ສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດ |
| ໄດ້ມາດຖານບາງສ່ວນ | ຫຼັກຖານທີ່ຢືນຢັນເຖິງຜົນສຳເລັດຂອງການຈັດຕັ້ງປະຕິບັດແມ່ນຍັງບໍ່ທັນຄົບຖ້ວນ. ຕ້ອງການຫລັກຖານທີ່ຈຳເປັນຕື່ມອີກ. |
| ບໍ່ໄດ້ມາດຖານ | ບໍ່ມີຫຼັກຖານທີ່ສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດ |
| ໃຊ້ການບໍ່ໄດ້ | ຕົວຊີ້ວັດບໍ່ໄດ້ກ່ຽວຂ້ອງກັບການປະເມີນຜົນ |

### ➢ ການໃຫ້ຄະແນນໃນການຈັດຕັ້ງປະຕິບັດ.

ການໃຫ້ຄະແນນແມ່ນອີງໃສ່ຜົນຂອງການປະເມີນຜົນ ຈາກຕົວຊີ້ວັດຍ່ອຍແຕ່ລະຕົວ, ຫຼັງຈາກນັ້ນ, ກໍ່ເອົາຄະແນນມາລວມເຂົ້າກັນໂດຍແບ່ງອອກເປັນ 3 ກຸ່ມໃຫຍ່ເຊັ່ນ: ມາດຖານຕ່ຳສຸດ, ມາດຖານສູງ ແລະ ມາດຖານດີທີ່ສຸດ. ເຊິ່ງຄະແນນດັ່ງກ່າວນີ້ແມ່ນເປັນຂໍ້ມູນໃຫ້ແກ່ຂັ້ນຕອນການສະເໜີ ຂໍໃບຢັ້ງຢືນການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

| | |
|---|---|
| ການລົງທະບຽນ | ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕ້ອງໄດ້ຄົບຕາມມາດຖານຕົວຊີ້ວັດຕໍ່າສຸດ ແລະ ມາດຖານສູງບໍ່ໃຫ້ລຸດ 60 % |
| ການຮັບຮອງ | ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະຕ້ອງໄດ້ຄົບຕາມມາດຖານຕົວຊີ້ວັດໃນແຕ່ລະມາດຖານ ໃນນັ້ນ ມາດຖານຕໍ່າສຸດແມ່ນ 70% ແລະ ມາດຖານສູງສຸດ 60% ຂຶ້ນໄປ. |
| | |

## ➢ ການລາຍງານຜົນຂອງປະເມີນ.

ໄດ້ສ້າງປຶ້ມຄູ່ມືສໍາລັບຜົນຂອງການປະເມີນການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.ປຶ້ມຄູ່ມືສໍາລັບຊຸມຊົນສໍາລັບໃຊ້ປະເມີນຕົນເອງໂດຍໝາຍເຄື່ອງໝາຍ “ ✓” ໃສ່ຫ້ອງສີ່ຫລ່ຽມ ແລະ ຈາກນັ້ນເອົາມາລວມເຂົ້າກັນເພື່ອເປັນຄະແນນລວມທັງໝົດ.

ປຶ້ມຄູ່ມືການປະເມີນຜົນແມ່ນມີເນື້ອໃນຄ້າຍຄືກັນ ແຕ່ວ່າຕ້ອງມີບົດລາຍງານຢັ້ງຢືນໃນການນໍາໃຊ້ເຄື່ອງມື ໃນການປະເມີນຜົນ.ນໍາໃຊ້ໂປແກຣມໄມໂຄຣຊອບເອັກເຊວ ໃນການສະຫຼຸບຄະແນນ. ສໍາລັບແຕ່ລະມາດຖານຍ່ອຍ ແມ່ນຈະໃຫ້ຄະແນນໂດຍອີງໃສ່ຕົວຊີ້ວັດຂອງແຕ່ລະມາດຖານ ແລະ ຫຼັງຈາກນັ້ນກໍຈະເອົາຄະແນນຂອງແຕ່ລະຕົວຊີ້ວັດມາລວມເຂົ້າກັນ (ຮູບພາບທີ 4)

**Sub-criterion 1.3: Effective and transparent management exists**

| Criterion | Sub-criterion | Indicators | Fully complies | Partly complies | Does not comply | Not applicable |
|---|---|---|---|---|---|---|
| Community ownership and management | Effective and transparent management operations | *Minimum requirements*<br>1.3.1. CBT management processes comply with all CBT standards and requirements, including for outside operators and FTOs. | ☑ | ☐ | ☐ | ☐ |
| | | 1.3.2. CBT Members agree to an ongoing commitment to the ASEAN CBT Member's Code of Conduct (Appendix 1). | ☑ | ☐ | ☐ | ☐ |
| | | 1.3.3. The CBT initiative builds the capacity of the community to provide products, goods and services to visiting tourists. | ☐ | ☑ | ☐ | ☐ |
| | | 1.3.4. The CBT initiative maximises use of goods and services provided by the community. | ☑ | ☐ | ☐ | ☐ |
| | | 1.3.5. A clear financial management system exists and is accessible to community members. | ☑ | ☐ | ☐ | ☐ |
| | | *Advanced requirements*<br>1.3.6. An annual action plan is documented and is accessible to community members. | ☐ | ☑ | ☐ | ☐ |
| | | 1.3.7. Long-term goals and objectives are documented and accessible to the community members. | ☐ | ☑ | ☐ | ☐ |
| | | *Best practice requirements*<br>1.3.8. Monitoring and evaluation mechanisms exist to assess the sustainability performance of individual and collective CBT activities. | ☐ | ☐ | ☑ | ☐ |
| | | **Total minimum requirements** | 4 | 1 | | |
| | | Total advanced requirements | | 2 | | |
| | | Total best practice requirements | | | 1 | |

ຮູບພາບທີ 4: ຕົວຢ່າງການລວມຄະແນນສໍາລັບມາດຖານຍ່ອຍ.

ຄະແນນລວມທັງໝົດຂອງມາດຖານຍ່ອຍ ແມ່ນຈະນຳມາລວມໃສ່ໃນບົດລາຍງານຂອງແຕ່ລະມາດຖານ (ຮູບພາບທີ **5**)

**Summary assessment for Criterion 1: Community ownership and management**

| Sub-criteria | | Fully complies | Partly complies | Does not comply | Not applicable |
|---|---|---|---|---|---|
| Sub-criterion 1.1: Effective and transparent governance arrangements exists | **Minimum requirement count** | **3** | **1** | **1** | |
| | Advanced requirement count | 2 | | | |
| | Best practice requirement count | | | | |
| Sub-criterion 1.2: Legitimate establishment | **Minimum requirement count** | **2** | | | |
| | Advanced requirement count | | | | |
| | Best practice requirement count | | | | |
| Sub-criterion 1.3: Effective and transparent management exists | **Minimum requirement count** | **4** | **1** | | |
| | Advanced requirement count | | 2 | | |
| | Best practice requirement count | | | 1 | |
| Sub-criterion 1.4: Effective partnerships exist | **Minimum requirement count** | **2** | | | |
| | Advanced requirement count | 1 | | | 1 |
| | Best practice requirement count | | | | 1 |
| | **Totals for minimum requirement indicators** | **11** | **2** | **1** | |
| | Totals for advanced requirement indicators | 3 | 2 | | 1 |
| | Totals for best practice requirement indicators | | | 1 | 1 |

ຮູບພາບທີ 5: ຕາຕະລາງສະຫຼຸບຄະແນນລວມສຳລັບມາດຕະຖານທີ 1.

ຄະແນນລວມທັງໝົດ ແມ່ນຈະນຳມາລວມໃສ່ໃນບົດລາຍງານການປະເມີນ (ຮູບພາບທີ **6**).

**Summary assessment**

| Criteria | | Fully complies | Partly complies | Does not comply | Not applicable |
|---|---|---|---|---|---|
| Criterion 1: Community ownership and management | **Minimum requirement count** | **11** | **2** | **1** | |
| | Advanced requirement count | 3 | 2 | | 1 |
| | Best practice requirement count | | | 1 | 1 |
| Criterion 2: Contribution to social well-being | **Minimum requirement count** | **7** | **1** | | |
| | Advanced requirement count | | 3 | 1 | 1 |
| | Best practice requirement count | | 1 | 3 | |
| Criterion 3: Contribution to conserve and improve the environment | **Minimum requirement count** | **4** | **1** | | |
| | Advanced requirement count | 2 | | | 1 |
| | Best practice requirement count | | 3 | | |
| Criterion 4: Encouragement of interaction between the local community and guests | **Minimum requirement count** | **2** | **2** | | |
| | Advanced requirement count | 2 | 2 | | |
| | Best practice requirement count | 3 | 1 | 1 | 1 |
| Criterion 5: Quality tour and guiding service | **Minimum requirement count** | **8** | | | |
| | Advanced requirement count | 4 | 2 | | |
| | Best practice requirement count | | 2 | 2 | 1 |
| Criterion 6: Quality food and beverage services | **Minimum requirement count** | **13** | **2** | | |
| | Advanced requirement count | 2 | 2 | 1 | |
| | Best practice requirement count | | 1 | 1 | |
| Criterion 7: Quality accommodations | **Minimum requirement count** | **18** | **2** | | |
| | Advanced requirement count | 8 | 3 | | |
| | Best practice requirement count | | | 2 | |
| Criterion 8: Performance of CBT Friendly Tour Operators (CBT FTO) | **Minimum requirement count** | **12** | **1** | **1** | **2** |
| | Advanced requirement count | 8 | | 3 | 1 |
| | Best practice requirement count | 1 | 3 | 1 | 1 |
| **Totals** | **Minimum requirement count** | 64 | 11 | 2 | 2 |
| | Advanced requirement count | 29 | 14 | 5 | 4 |
| | Best practice requirement count | 4 | 11 | 8 | 4 |

ຮູບພາບທີ 6: ຕົວຢ່າງການສະຫຼຸບຄະແນນລວມສຳລັບ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

## ➢ ການຢັ້ງຢືນຜົນສຳເລັດ.

ແຕ່ລະຂັ້ນຕອນຂອງການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນຈະໄດ້ຖືກຮັບຮອງ ແລະ ໄດ້ໃບຢັ້ງຢືນ. ໃບຢັ້ງຢືນໄດ້ແຍກອອກຕາງຫາກຊຶ່ງມີຂະໜາດເທົ່າກັບຂະໜາດເຈ້ຍ A4 (297ມມ x 210ມມ).

ໃບຢັ້ງຢືນແມ່ນຈັດພິມ ຫລື ສະລັກໃສ່ແຜ່ນສະແຕນເລດຊຶ່ງມີຂະໜາດເຈ້ຍ A5 (210ມມ X 148ມມ).












## 6. ມາດຕະຖານ ແລະ ຕົວຊີ້ວັດການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

### ມາດຖານ 1: ການເປັນເຈົ້າຂອງ ແລະ ການຄຸ້ມຄອງຂອງຊຸມຊົນ.

ການດໍາເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະຕ້ອງແມ່ນຄົນໃນຊຸມຊົນເປັນຜູ້ຄຸ້ມຄອງ ເພື່ອເປັນການປັບປຸງ ແລະ ຍົກສູງຄຸນນະພາບຊີວິດຂອງຄົນໃນຊຸມຊົນໃຫ້ດີຂຶ້ນ.

### ມາດຖານຍ່ອຍ 1.1: ການຄຸ້ມຄອງທີ່ມີປະສິດທິພາບ ແລະ ມີຄວາມໂປ່ງໃສ

| ຕົວຊີ້ວັດ | ໄດ້ຄົບມາດຕະຖານ | ໄດ້ມາດຕະຖານບາງ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 1.1.1 ການຄຸ້ມຄອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນສະມາຊິກໃນຊຸມຊົນເປັນຜູ້ດໍາເນີນການເອງ ໂດຍຜ່ານການຄັດເລືອກຈາກຄະນະຮັບຜິດຊອບ ຊຶ່ງມີໄລຍະໃນການດໍາເນີນງານເປັນເວລາ 5 ປີ | ☐ | ☐ | ☐ | ☐ |
| 1.1.2 ການດໍາເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນມີໂຄງຮ່າງການຈັດຕັ້ງຈະແຈ້ງ ແລະ ຊັດເຈນ ມີການແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບຢ່າງລະອຽດ | ☐ | ☐ | ☐ | ☐ |
| 1.1.3 ການດໍາເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນຖືກຕ້ອງຕາມລະບຽບກົດໝາຍ ແລະ ບໍ່ຜິດຕໍ່ຮີດຄອງປະເພນີຂອງຊຸມຊົນ | ☐ | ☐ | ☐ | ☐ |
| 1.1.4 ການຮັບສະໝັກສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນຖືກຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ | ☐ | ☐ | ☐ | ☐ |
| 1.1.5 ການຮັບສະໝັກສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ເພື່ອໃຫ້ບໍລິການໃນພາກສ່ວນຕ່າງໆເຊັ່ນ: ການໃຫ້ບໍລິການນໍາທ່ຽວ, ການໃຫ້ບໍລິການທີ່ພັກ, ການໃຫ້ບໍລິການອາຫານ ແລະ ເຄື່ອງດື່ມແມ່ນອີງໃສ່ສິດສະເໝີພາບບົດບາດຍິງ-ຊາຍທີ່ທາງຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໄດ້ປະຕິບັດ | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 8.1.6 ການຮັບສະໝັກພະນັກງານທີ່ໃຫ້ບໍລິການໃນພາກສ່ວນຕ່າງໆ ແມ່ນອີງໃສ່ຄວາມເໝາະສົມ ແລະ ຄວາມຮູ້ຄວາມສາມາດຕົວຈິງຂອງຜູ້ກ່ຽວ | ☐ | ☐ | ☐ | ☐ |
| 1.1.7 ການຮັບເອົາສະມາຊິກໃໝ່ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມແມ່ນຕ້ອງໄດ້ຮັບການຕົກລົງເຫັນດີເປັນເອກະພາບຈາກຄະນະຮັບຜິດຊອບ | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |

### ມາດຖານຍ່ອຍ 1.2: <u>ການສ້າງຕັ້ງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມແມ່ນຖືກຕ້ອງຕາມລະບຽບກົດໝາຍ.</u>

| ຕົວຊີ້ວັດ | ໄດ້ເກີນມາດຕະຖານ | ໄດ້ມາດຕະ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| <u>ມາດຖານຕໍ່າສຸດ</u> | | | | |
| 1.2.1 ການດໍາເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນໄດ້ຮັບການຕົກລົງເຫັນດີຈາກຄະນະຮັບຜິດຊອບຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ | ☐ | ☐ | ☐ | ☐ |
| 1.2.2 ການດໍາເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນໄດ້ຮັບການສະໜັບສະໜູນຈາກພາກສ່ວນຕ່າງໆເຊັ່ນ: ອໍານາດການປົກຄອງ ແລະ ປະຊາຊົນໃນຊຸມຊົນ | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |

### ມາດຖານຍ່ອຍ 1.3: <u>ການຄຸ້ມຄອງທີ່ມີປະສິດທິພາບ ແລະ ມີຄວາມໂປ່ງໃສ</u>

| ຕົວຊີ້ວັດ | ໄດ້ເກີນມາດຕະຖານ | ໄດ້ມາດຕະ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| <u>ມາດຖານຕໍ່າສຸດ</u> | | | | |
| 1.3.1 ຂະບວນການຄຸ້ມຄອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນສອດຄ່ອງກັບບັນດາມາດຖານທີ່ກໍານົດໄວ້ ເຊິ່ງລວມມີສະຖານທີ່ທ່ອງທ່ຽວ, ຜູ້ປະກອບການພາຍນອກ ແລະ ບໍລິສັດທ່ອງທ່ຽວຕ່າງໆ. | ☐ | ☐ | ☐ | ☐ |
| 1.3.2 ຜູ້ທີ່ເຂົ້າເປັນສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນຍິນດີ ປະຕິບັດຕາມລະບຽບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ອາຊຽນຢ່າງຕໍ່ເນື່ອງ (ເອກະສານຊ້ອນທ້າຍ 1). | ☐ | ☐ | ☐ | ☐ |
| 1.3.3 ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໄດ້ຊ່ວຍສ້າງຄວາມອາດສາມາດໃຫ້ກັບຊຸມຊົນໃນການສົ່ງເສີມການສ້າງຜະລິດຕະພັນ ແລະ ການບໍລິການໃຫ້ແກ່ນັກທ່ອງທ່ຽວ. | ☐ | ☐ | ☐ | ☐ |
| 1.3.4 ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຊ່ວຍສົ່ງເສີມການຊົມໃຊ້ສິນຄ້າ ແລະ ການບໍລິການຂອງຊຸມຊົນເອງ. | ☐ | ☐ | ☐ | ☐ |
| 1.3.5 ລະບົບການບໍລິຫານການເງິນທີ່ໂປ່ງໃສ ແລະ ສະມາຊິກພາຍໃນຊຸມຊົນສາມາດເຂົ້າເຖິງແຫລ່ງທຶນນັ້ນໄດ້. | ☐ | ☐ | ☐ | ☐ |
| <u>ມາດຖານສູງ</u> | | | | |
| 1.3.6 ໄດ້ສ້າງແຜນວຽກປະຈໍາປີ ແລະ ສະມາຊິກໃນຊຸມຊົນສາມາດຮັບຮູ້ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ. | ☐ | ☐ | ☐ | ☐ |
| 1.3.7 ໄດ້ມີການສ້າງເປົ້າໝາຍ ແລະ ຈຸດປະສົງໄລຍະຍາວ ເຊິ່ງເປັນເອກະສານທີ່ສະມາຊິກທຸກຄົນໃນຊຸມຊົນສາມາດເຂົ້າເຖິງໄດ້. | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| <u>ມາດຖານສູງສຸດ</u> | | | | |
| 1.3.8 ມີການຕິດຕາມ ແລະ ປະເມີນຜົນ ແມ່ນເພື່ອປະເມີນການຈັດຕັ້ງປະຕິບັດກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທັງຂອງບຸກຄົນ ແລະ ຂອງສ່ວນລວມ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

ມາດຖານຍ່ອຍ 1.4: <u>ການຮ່ວມມືທີ່ມີປະສິດທິພາບ</u>

| ຕົວຊີ້ວັດ | ໄດ້ເຕັມມາດຕະຖານ | ໄດ້ມາດຕະຖານບາງ- | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| <u>ມາດຖານຕ່ຳສຸດ</u> | | | | |
| 1.4.1 ມີຄູ່ມືສຳລັບບໍລິສັດທ່ອງທ່ຽວພາຍໃນ ເພື່ອປະສານງານກັບຊຸມຊົນ. | ☐ | ☐ | ☐ | ☐ |
| 1.4.2 ໃນການດຳເນີນກິດຈະກຳຕ່າງໆ ໃຫ້ຫຼີກລ້ຽງຜົນກະທົບທີ່ອາດເກີດຂຶ້ນຕໍ່ກັບຊຸມຊົນໃກ້ຄຽງ. | ☐ | ☐ | ☐ | ☐ |
| <u>ມາດຖານສູງ</u> | | | | |
| 1.4.3 ໄດ້ກຳນົດພາລະບົດບາດຂອງພາກສ່ວນກ່ຽວຂ້ອງ ເພື່ອສົ່ງເສີມການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. | ☐ | ☐ | ☐ | ☐ |
| 1.4.4 ມີຂັ້ນຕອນໃຫ້ຄຳປຶກສາຕໍ່ກັບຜູ້ທີ່ກ່ຽວຂ້ອງ ຫຼື ມີສ່ວນຮ່ວມ. | ☐ | ☐ | ☐ | ☐ |
| <u>ມາດຖານສູງສຸດ</u> | | | | |
| 1.4.5 ມີການຮ່ວມມືກັບຊຸມຊົນອ້ອມຂ້າງ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |



**ມາດຖານ 2: ການປະກອບສ່ວນໃຫ້ສັງຄົມ.**

ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຈະເປັນສິ່ງສຳຄັນຢ່າງໜຶ່ງ ໃນການປະກອບສ່ວນໃຫ້ຊີວິດການເປັນຢູ່ຂອງຄົນໃນສັງຄົມດີຂຶ້ນ.

**ມາດຖານຍ່ອຍ 2.1: ການຮັກສາວິຖີຊີວິດຂອງຊຸມຊົນ**

| ຕົວຊີ້ວັດ | ໄດ້ມາດຕະຖານ | ໄດ້ມາດຕະຖານ ບາງສ່ວນ | ບໍ່ໄດ້ມາດຕະ ຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕ່ຳສຸດ | | | | |
| 2.1.1 ໃນຊຸມຊົນທ້ອງຖິ່ນບໍ່ໃຫ້ມີປາກົດການຄ້າປະເວນີ, ການຄ້າສິ່ງເສບຕິດ, ການຄ້າມະນຸດ ແລະ ການຫາຜົນປະໂຫຍດຈາກການໃຊ້ແຮງງານເດັກ. | ☐ | ☐ | ☐ | ☐ |
| 2.1.2 ບັນດາກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະຊ່ວຍຍົກສູງບົດບາດຍິງ-ຊາຍໃນສັງຄົມ. | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 2.1.3 ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະສ້າງຄວາມອາດສາມາດໃຫ້ແກ່ສະມາຊິກຜູ້ດ້ອຍໂອກາດ ທີ່ຢູ່ໃນຊຸມຊົນໃຫ້ໄດ້ຮັບປະໂຫຍດຢ່າງເໝາະສົມ ຈາກການທ່ອງທ່ຽວ (ຜູ້ດ້ອຍໂອກາດແມ່ນລວມເຖິງເດັກນ້ອຍ ແລະ ຜູ້ເຖົ້າ). | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 2.1.4 ກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຈະຊ່ວຍປັບປຸງການບໍລິການຂັ້ນພື້ນຖານ (ສຸຂະພິບານ, ໄຟຟ້າ, ການສຶກສາ ແລະ ສາທາລະນະສຸກ). | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

**ມາດຖານຍ່ອຍ 2.2: ຜົນໄດ້ ແລະ ຜົນເສຍເທົ່າກັນ**

| ຕົວຊີ້ວັດ | ໄດ້ຕາມມາດຕະ ຖານ | ໄດ້ມາດຕະຖານ ບາງສ່ວນ | ບໍ່ໄດ້ມາດຕະ ຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕ່ຳສຸດ | | | | |
| 2.2.1 ມີການກະກຽມໃນດ້ານການແບ່ງປັນຜົນປະໂຫຍດທີ່ເປັນເອກະພາບ ແລະ ມີຄວາມຊັດເຈນ. | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 2.2.2 ກອງທຶນພັດທະນາຊຸມຊົນ ແມ່ນໃຊ້ສຳລັບການເຄື່ອນໄຫວອອງກງານທີ່ສ້າງຜົນໂຫຍດໃຫ້ແກ່ຊຸມຊົນ. | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |

| | | | | |
|---|---|---|---|---|
| 2.2.3 ມີຂັ້ນຕອນທີ່ດີໃນການສ້າງໂອກາດເພື່ອສ້າງລາຍຮັບໃຫ້ເທົ່າທຽມກັນ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

### ມາດຖານຍ່ອຍ 2.3: ມີການເຊື່ອມໂຍງກັບເສດຖະກິດພາກພື້ນ

| ຕົວຊີ້ວັດ | ໄດ້ຄົບມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕ່ຳສຸດ | | | | |
| 2.3.1 ການຈ້າງງານໃນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕ້ອງແມ່ນສະມາຊິກຂອງຊຸມຊົນໃນທ້ອງຖິ່ນນັ້ນໆ. | ☐ | ☐ | ☐ | ☐ |
| 2.3.2 ນຳໃຊ້ຜະລິດຕະພັນໃນຊຸມຊົນທ້ອງຖິ່ນ ເຂົ້າໃນການທ່ອງທ່ຽວແບບປະຊາ<br>ຊົນມີສ່ວນຮ່ວມ. | ☐ | ☐ | ☐ | ☐ |
| ມາດຖານຕ່ຳສຸດ | | | | |
| 2.3.3 ນຳໃຊ້ຜະລິດຕະພັນຂອງຊຸມຊົນທ້ອງຖິ່ນ ແທນການນຳເຂົ້າຜະລິດຕະພັນຈາກພາຍນອກ (ຕົວຢ່າງ: ການຜະລິດພາຍໃນທ້ອງຖິ່ນ ກັບສິນຄ້າທີ່ລະນຶກທີ່ຜະລິດແບບເອກະເທດ). | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 2.3.4 ເພີ່ມທະວີການຮ່ວມມື ກັບບັນດາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມປະເພດອື່ນໆ ແລະ ບັນດາອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນເພື່ອເພີ່ມທະວີການທ່ອງທ່ຽວໃນພາກພື້ນໃຫ້ຈະເລີນຂຶ້ນເລື້ອຍໆ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |



### ມາດຖານຍ່ອຍ 2.4: ມີການປົກປັກຮັກສາ, ສືບທອດວັດທະນະທຳ ແລະ ຮີດຄອງປະເພນີ

| ຕົວຊີ້ວັດ | ໄດ້ເຖິງມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 2.4.1 ຄຸນຄ່າທາງດ້ານວັດທະນະທຳ ທີ່ມີຄວາມໝາຍສຳຄັນຕໍ່ຮີດຄອງປະເພນີ ແລະ ຊຸມຊົນທ້ອງຖິ່ນແມ່ນຈະໄດ້ຮັບການອະນຸລັກຮັກສາ, ບັນທຶກໄວ້ ແລະ ໄດ້ຮັບການຍອມຮັບຈາກຊຸມຊົນອ້ອມຂ້າງ. | ☐ | ☐ | ☐ | ☐ |
| 2.4.2 ເພີ່ມທະວີ ແລະ ເອົາໃຈໃສ່ປົກປັກຮັກສາວັດທະນະທຳທ້ອງຖິ່ນທີ່ເປັນເອກະລັກ ແລະ ຄຸນຄ່າທາງດ້ານວັດທະນະທຳໃຫ້ດຳລົງຄົງຢູ່. | ☐ | ☐ | ☐ | ☐ |
| 2.4.3 ຕ້ອງມີການປະຕິບັດຕາມກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບການປົກປັກຮັກສາວັດທະນະທຳ ແລະ ມໍລະດົກ. | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 2.4.4 ການຄຸ້ມຄອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ທີ່ດີຈະຊ່ວຍຮັກສາຮີດຄອງປະເພນີ ແລະ ປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃຫ້ດີຂຶ້ນ. | ☐ | ☐ | ☐ | ☐ |
| 2.4.5 ມີການແນະນຳຜູ້ທີ່ມາທ່ອງທ່ຽວສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດເວລາຢູ່ໃນທ້ອງຖິ່ນນັ້ນ. | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 2.4.6 ໄດ້ຜ່ານຂັ້ນຕອນການປຶກສາຫາລືກັບຊຸມຊົນ ກ່ຽວກັບ ການອະນຸຍາດໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວຊົມ ວັດທະນະທາທີ່ເປັນເອກະລັກຂອງທ້ອງຖິ່ນ ແລະ ສາມາດແລກປ່ຽນວັດທະນະທຳເຊິ່ງກັນ ແລະ ກັນໄດ້. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |



## ມາດຖານ 3: ການມີສ່ວນຮ່ວມໃນການອະນຸລັກຮັກສາສະພາບແວດລ້ອມ.

ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມເພື່ອສົ່ງເສີມການອະນຸລັກ ແລະປັບປຸງຄຸນນະພາບຂອງສະພາບແວດລ້ອມ.

### ມາດຖານຍ່ອຍ 3.1: ການອະນຸລັກຊັບພະຍາກອນທຳມະຊາດ

| ຕົວຊີ້ວັດ | ໄດ້ຄົບມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 3.1.1 ແຫລ່ງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແມ່ນມີຄວາມສຳຄັນຕໍ່ຊຸມຊົນ ຊຶ່ງໄດ້ຮັບການລະບຸ, ບັນທຶກ, ວາງແຜນ ແລະ ຍອມຮັບຈາກຊຸມຊົນອ້ອມຂ້າງ. | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 3.1.2 ມີກອງທຶນສົ່ງເສີມບັນດາໂຄງການ ແລະ ການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. | ☐ | ☐ | ☐ | ☐ |
| 3.1.3 ມີໂຄງການສະໜັບສະໜູນການພັດທະນາຄຸນຄ່າຂອງຊັບພະຍາກອນທ້ອງຖິ່ນ ໃຫ້ຍັງຄົງຄວາມອຸດົມສົມບູນ. | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 3.1.4 ມີກົດລະບຽບ ແລະ ຂໍ້ບັງຄັບຂອງຊຸມຊົນ ໃນການອະນຸລັກຊັບພະຍາກອນທຳມະຊາດ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

### ມາດຖານຍ່ອຍ 3.2: ວຽກງານການອະນຸລັກ ເພື່ອປົກປັກຮັກສາສິ່ງແວດລ້ອມ

| ຕົວຊີ້ວັດ | ໄດ້ມາດຕະຖານ | ໄດ້ມາດຕະຖານບາງ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 3.2.1 ມີກອງທຶນສົ່ງເສີມການຈັດຕັ້ງປະຕິບັດ ວຽກງານການປົກປັກຮັກສາສິ່ງແວດລ້ອມຂອງຊຸມຊົນ. | ☐ | ☐ | ☐ | ☐ |
| 3.2.2 ມີລະບົບການກຳຈັດຂີ້ເຫຍື້ອທີ່ເໝາະສົມ ໃນຊຸມຊົນເພື່ອຫຼີກລ້ຽງການສະສົມຂີ້ເຫຍື້ອ ໂດຍນຳໃຊ້ຫຼັກການ 3 Rs: Reduce (ໃຊ້ໃຫ້ໜ້ອຍລົງ), Resue (ນຳໃຊ້ຄືນ), Recycle (ນຳມາຜະລິດຄືນໃໝ່) ແລະ ການກຳຈັດຂີ້ເຫຍື້ອທີ່ຍ່ອຍສະຫຼາຍ ໄດ້ດ້ວຍການນຳໄປເຮັດເປັນປຸ໋ຍຊີວະພາບ. | ☐ | ☐ | ☐ | ☐ |
| 3.2.3 ມີການບຳບັດນ້ຳເປື້ອນທີ່ເໝາະສົມ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດ ລ້ອມ ແລະ ສຸຂະພາບຂອງຊຸມຊົນ. | ☐ | ☐ | ☐ | ☐ |
| 3.2.4 ຕ້ອງປະຕິບັດຕາມກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງໃນການ | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| ປົກປັກຮັກສາສິ່ງແວດລ້ອມ. | | | | |
| <u>ມາດຖານສູງ</u> | | | | |
| 3.2.5 ຂີ້ເຫຍື້ອທີ່ສາມາດນຳກັບມາໃຊ້ຄືນໄດ້ ຕົວຢ່າງ: ຂວດນ້ຳດື່ມທີ່ໃຊ້ແລ້ວສາມາດເອົາມາເກັບນ້ຳປະປາໄວ້ໃຊ້ໄດ້. | ☐ | ☐ | ☐ | ☐ |
| <u>ມາດຖານສູງສຸດ</u> | | | | |
| 3.2.6 ມີຂໍ້ມູນຂ່າວສານທາງດ້ານສິ່ງແວດລ້ອມ ທີ່ສາມາດຕອບສະໜອງໃຫ້ແກ່ນັກທ່ອງທ່ຽວ ແລະ ຊຸມຊົນທ້ອງຖິ່ນ. | ☐ | ☐ | ☐ | ☐ |
| 3.2.7 ເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອະນຸຍາດໃຫ້ມີສານກາກບ໊ອນໄດອ໊ອກໄຊໜ້ອຍທີ່ສຸດ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |



### ມາດຖານ 4: ການຊຸກຍູ້ສົ່ງເສີມໃຫ້ມີການແລກປ່ຽນ ລະຫວ່າງ ຊຸມຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ.

ຜົນສຳເລັດຂອງການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ ແມ່ນຂຶ້ນຢູ່ກັບຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວທີ່ໄດ້ປະສົບການ ແລະ ຜົນປະໂຫຍດໃຫ້ຕໍ່ຊຸມຊົນທ້ອງຖິ່ນ.

ມາດຖານຍ່ອຍ 4.1: <u>ມີການແລກປ່ຽນ ລະຫວ່າງຊຸມຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ.</u>

| ຕົວຊີ້ວັດ | ໄດ້ຕາມມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| <u>ມາດຖານຕໍ່າສຸດ</u> | | | | |
| 4.1.1 ຂໍ້ມູນກ່ຽວກັບສະພາບແວດລ້ອມ ແລະ ວັດທະນະທຳແມ່ນໄດ້ຮັບການອະທິບາຍຄວາມໝາຍຄວາມສຳຄັນໂດຍຊຸມຊົນ ແລະ ຊຸມຊົນອ້ອມຂ້າງ. | ☐ | ☐ | ☐ | ☐ |
| 4.1.2 ຮັບປະກັນດ້ານຄວາມປອດໄພແກ່ນັກທ່ອງທ່ຽວ. | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| <u>ມາດຖານສູງ</u> | | | | |
| 4.1.3 ມີກົດລະບຽບສຳຫຼັບ ຊຸມຊົນ, ເຈົ້າພາບ ແລະ ນັກທ່ອງທ່ຽວ. | ☐ | ☐ | ☐ | ☐ |
| 4.1.4 ຄວາມຄາດຫວັງຂອງນັກທ່ອງທ່ຽວ ແມ່ນການນຳສະເໜີຂໍ້ມູນທີ່ຖືກຕ້ອງ. | ☐ | ☐ | ☐ | ☐ |
| 4.1.5 ມີການເກັບກຳ ແລະ ຮັບເອົາຄຳຕິນິຕິຊົມຈາກແຂກ ເພື່ອປັບປຸງໃຫ້ດີຂຶ້ນ. | ☐ | ☐ | ☐ | ☐ |
| <u>ມາດຖານສູງສຸດ</u> | | | | |
| 4.1.6 ມີການສື່ສານ ແລະ ສ້າງຄວາມເຂົ້າໃຈທາງດ້ານວັດທະນະທຳເຊິ່ງກັນ ແລະ ກັນ. | ☐ | ☐ | ☐ | ☐ |
| 4.1.7 ເປີດໂອກາດໃຫ້ນັກທ່ອງທ່ຽວໄດ້ມີສ່ວນຮ່ວມ ເຮັດກິດຈະກຳຕ່າງໆ ຂອງຊຸມຊົນ. | ☐ | ☐ | ☐ | ☐ |
| 4.1.8 ມີການລາຍງານ ຮັບເອົາຄຳຕິນິຕິຊົມຈາກແຂກ ເພື່ອປັບປຸງໃນແຕ່ລະອາທິດ ແລະ ລາຍງານປະຈຳປີໃຫ້ກັບສະມາຊິກໃນຊຸມຊົນໄດ້ຮັບຊາບ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

ມາດຖານຍ່ອຍ 4.2: <u>ຄວາມຍືນຍົງຂອງຜະລິດຕະພັນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ</u>

| ຕົວຊີ້ວັດ | ໄດ້ຕາມມາດຖານ | ໄດ້ມາດຖານບາງສ່ວນ | ບໍ່ໄດ້ມາດຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| <u>ມາດຖານຕ່ຳສຸດ</u> | | | | |
| 4.2.1 ການຕັ້ງລາຄາສິນຄ້າ ຫຼື ຜະລິດຕະພັນໃຫ້ມີຄວາມຍຸດຕິທຳ ເໝາະສົມ ແລະ ໃຫ້ຜົນຕອບແທນທີ່ພຽງພໍໃນການລົງທຶນຂອງຊຸມຊົນ. | ☐ | ☐ | ☐ | ☐ |
| <u>ມາດຖານສູງ</u> | | | | |
| 4.2.2 ຜົນຕອບແທນທີ່ດີ ຈະສ້າງລາຍຮັບຕໍ່ສັງຄົມ, ວັດທະນະທຳ, ສິ່ງແວດລ້ອມ ແລະ ເສດຖະກິດ. | ☐ | ☐ | ☐ | ☐ |
| <u>ມາດຖານສູງສຸດ</u> | | | | |
| 4.2.3 ກຸ່ມລູກຄ້າເປົ້າໝາຍແມ່ນໄດ້ເລືອກເອົາຕາມຄວາມຕ້ອງການຂອງການໃຫ້ບໍລິການຂອງເຂົາເຈົ້າ. | ☐ | ☐ | ☐ | ☐ |
| 4.2.4 ຜະລິດຕະພັນທີ່ເປັນເອກະລັກ ແລະ ການບໍລິການທີ່ເໝາະສົມ ພ້ອມແລ້ວທີ່ຈະສະໜອງຕາມຄວາມຕ້ອງການ ຂອງຕະຫລາດທີ່ກຳນົດໄວ້, ຮັກສາ ແລະ ສົ່ງເສີມຄຸນຄ່າທາງວັດທະນະທຳ ແລະ ສິ່ງແວດລ້ອມ, ສິນຄ້າ ແລະ ບໍລິການ. | ☐ | ☐ | ☐ | ☐ |
| 4.2.5 ມີຕະຫຼາດເປົ້າໝາຍ ແລະ ລາຄາທີ່ສົມເຫດສົມຜົນ ຈະເປັນການດຶງດູດຕະຫຼາດເປົ້າໝາຍຕາມທີ່ກຳນົດໄວ້. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |

| | | | | |
|---|---|---|---|---|
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

## ມາດຖານ 5: ການທ່ອງທ່ຽວ ແລະ ການບໍລິການນໍາທ່ຽວທີ່ມີຄຸນນະພາບ.

ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນກິດຈະກໍາໃດໜຶ່ງທີ່ດໍາເນີນການໂດຍສະມາຊິກໃນຊຸມຊົນເອງ ເພື່ອບໍລິການລູກຄ້າທີ່ເຂົ້າມາທ່ຽວຊົມ ແລະ ຮຽນຮູ້ກ່ຽວກັບວິຖີຊີວິດ, ວັດທະນະທໍາ ແລະ ສະພາບແວດລ້ອມໃນຊຸມຊົນ. ພະນັກງານນໍາທ່ຽວ ຈະເປັນສະມາຊິກໃນຊຸມຊົນທີ່ອາໄສຢູ່ໃນຊຸມຊົນນັ້ນ ແລະ ໄດ້ຮັບການຍອມຮັບ-ໄວ້ວາງໃຈຈາກຊຸມຊົນດັ່ງກ່າວ ທີ່ສາມາດເປັນຕົວແທນ ແລະ ນໍາສະເໜີສິ່ງດີໆຂອງຊຸມຊົນ. ບຸກຄົນນັ້ນໆ, ຕ້ອງກໍາແໜ້ນຂໍ້ມູນພາຍໃນຊຸມຊົນ, ມີທັກສະດີ, ມີປະສົບການ ແລະ ທັດສະນະຄະຕິທີ່ດີ. ບຸກຄົນທີ່ຈະມາເປັນຜູ້ນໍາທ່ຽວຕ້ອງພິຈາລະນາຜູ້ດ້ອຍໂອກາດ ຫຼື ມີລະດັບການສຶກສາຕາມຄວາມເໝາະສົມ.

### ມາດຖານຍ່ອຍ 5.1: ການຮັບປະກັນຄຸນນະພາບ ແລະ ຄວາມຊໍານານຂອງພະນັກງານນໍາທ່ຽວ.

| ຕົວຊີ້ວັດ | ໄດ້ເຕັມມາດຖານ | ໄດ້ມາດຖານບາງ | ບໍ່ໄດ້ມາດຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 5.1.1 ພະນັກງານນໍາທ່ຽວທີ່ໄດ້ຜ່ານການຝຶກອົບຮົມ ແລະ ຄັດເລືອກເອົາຕາມລະດັບຄວາມຮູ້ຄວາມສາມາດ, ສະພາບຮ່າງກາຍ ແລະ ຄວາມແຂງແຮງເພື່ອຮອງຮັບການນໍາທ່ຽວໃນແຕ່ລະກິດຈະກໍາໄດ້. | ☐ | ☐ | ☐ | ☐ |
| 5.1.2 ພະນັກງານນໍາທ່ຽວຕ້ອງມີພັນທະ ໃນການພັດທະນາຄວາມຮູ້ທາງດ້ານວັດທະນະທໍາ ແລະ ສະພາບແວດລ້ອມຂອງທ້ອງຖິ່ນທີ່ລວມເຖິງປະຫວັດຄວາມເປັນມາ, ຮີດຄອງປະເພນີ, ພູມສັນຖານ, ພືກສາຊາດ ແລະ ສັດສາວາສິ່ງ ແລະ ສະຖານທີ່ວັດທະນະທໍາ/ມໍລະດົກ ແລະ ຫຼັກການທ່ອງທ່ຽວແບບຍືນຍົງ | ☐ | ☐ | ☐ | ☐ |
| 5.1.3 ພະນັກງານນໍາທ່ຽວຕ້ອງປະຕິບັດຕາມມາດຕະຖານ ແລະ ກົດລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ດ້ວຍການເຊັນສັນຍາ (ເອກະສານຊ້ອນທ້າຍ 2) | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 5.1.4 ພະນັກງານນໍາທ່ຽວຕ້ອງໄດ້ຮັບການຢັ້ງຢືນ ຈາກມາດຕະຖານທີ່ກ່ຽວຂ້ອງເພື່ອເພີ່ມສັກກາຍະພາບ ໃນການບໍລິການ. | ☐ | ☐ | ☐ | ☐ |
| 5.1.5 ພະນັກງານນໍາທ່ຽວຕ້ອງເປັນຜູ້ອໍານວຍສະດວກ ໃນການນໍາພາແຂກໄປທ່ຽວຊົມທາງດ້ານສິ່ງແວດລ້ອມ, ວັດທະນະທໍາ-ສັງຄົມ ແລະ ອື່ນໆ. | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 5.1.6 ພະນັກງານນໍາທ່ຽວ ຕ້ອງໄດ້ຮັບໂອກາດໃນການຍົກລະດັບ ແລະ ຝຶກອົບຮົມ ເພື່ອເພີ່ມທັກສະ ແລະ ຄວາມຮູ້ຕ່າງໆເຊັ່ນ:<br>• ການທ່ອງທ່ຽວແບບຍືນຍົງ.<br>• ການອະທິບາຍຄວາມໝາຍຄວາມສໍາຄັນ.<br>• ການບໍລິຫານວຽກງານເປັນກຸ່ມ. | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| • ການບໍລິການ/ເອົາໃຈໃສ່ລູກຄ້າ.<br>• ການສື່ສານ (ລວມເຖິງການຮັບຮູ້/ຄວາມເຂົ້າໃຈວັດທະນະທຳຕ່າງໆ ແລະ ການສື່ສານທາງດ້ານພາສາ).<br>• ການປະຖົມພະຍາບານເບື້ອງຕົ້ນ ແລະ ຄວາມປອດໄພ.<br>• ວັດທະນະທຳຮີດຄອງປະເພນີທີ່ແທ້ຈິງຂອງທ້ອງຖິ່ນ, ຄວາມຊື່ສັດ, ເອກະລັກ ແລະ ຄຸນຄ່າ,ການປົກປັກຮັກສາສິ່ງແວດລ້ອມ.<br>• ຕ້ອງກຳໄດ້ເງື່ອນໄຂ ແລະ ກົດລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ແລະ ຂົງເຂດອື່ນໆທີ່ເຫັນວ່າມີຄວາມຈຳເປັນຕາມການເຫັນດີຂອງຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. | | | | |
| **ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ** | | | | |
| **ລວມຄະແນນທັງໝົດຂອງມາດຖານສູງ** | | | | |
| **ລວມທັງໝົດຂອງມາດຖານທີ່ດີທີ່ສຸດ** | | | | |

**ມາດຖານຍ່ອຍ 5.2: ຄຸນນະພາບຂອງລາຍການທ່ອງທ່ຽວ ແລະ ກິດຈະກຳຕ່າງໆ**

| ຕົວຊີ້ວັດ | ໄດ້ເຖິງມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| **ມາດຖານຕໍ່າສຸດ** | | | | |
| 5.2.1 ການດຳເນີນທຸລະກິດທ່ອງທ່ຽວ/ກິດຈະກຳຕ່າງໆຕ້ອງສອດຄ່ອງກັບຈຸດປະສົງ, ບົດແນະນຳ, ກົດລະບຽບ ແລະ ຫລັກການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. | ☐ | ☐ | ☐ | ☐ |
| 5.2.2 ລາຍການທ່ອງທ່ຽວ/ກິດຈະກຳຕ່າງໆຕ້ອງຮັບປະກັນ ການມີສ່ວນຮ່ວມລະຫວ່າງນັກທ່ອງທ່ຽວກັບຊຸມຊົນທ້ອງຖິ່ນ ເພື່ອໃຫ້ມີການແລກປ່ຽນປະສົບການທາງດ້ານວັດທະນະທຳ, ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ໃນຊຸມຊົນ. | ☐ | ☐ | ☐ | ☐ |
| 5.2.3 ລາຍການທ່ອງທ່ຽວ/ກິດຈະກຳໄດ້ກຳນົດໄວ້ຢ່າງຊັດເຈນ:<br>• ລາຍລະອຽດຂອງການນຳທ່ຽວ ແລະ ການກຳນົດລາຄາ; ແລະ<br>• ມີການສັ່ງຈອງ ແລະ ໄດ້ຮັບການບັນທຶກຢ່າງເປັນລະບົບ. | ☐ | ☐ | ☐ | ☐ |
| 5.2.4 ລາຍການທ່ອງທ່ຽວ/ກິດຈະກຳທ່ອງທ່ຽວ ໄດ້ບັນທຶກຂໍ້ມູນຂອງນັກທ່ອງທ່ຽວ ພ້ອມທັງກຳນົດໃຫ້ລະອຽດທັງເວລາໄປຮັບ ແລະ ໄປສົ່ງ. | ☐ | ☐ | ☐ | ☐ |
| 5.2.5 ນັກທ່ອງທ່ຽວໄດ້ຮັບຊາບກ່ຽວກັບລາຍການເດີນທາງ, ລະດັບຄວາມຍາກລຳບາກ, ຄວາມອັນຕະລາຍທີ່ອາດເກີດຂຶ້ນ, ຄວາມປອດໄພ ແລະ ກົດລະບຽບ ຫຼື ຂໍ້ບັງຄັບທີ່ໃຊ້ໃນການເດີນທາງທ່ອງທ່ຽວ. | ☐ | ☐ | ☐ | ☐ |
| **ມາດຖານສູງ** | | | | |
| 5.2.6 ຜູ້ປະກອບການທຸລະກິດນຳທ່ຽວຕ້ອງດຳເນີນງານ ບົນພື້ນຖານການໃຫ້ຜົນຕອບແທນ ແລະ ຜົນປະໂຫຍດແກ່ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| 5.2.7 ລະບົບຄວບຄຸມ ແລະ ປັບປຸງຄຸນນະພາບ ລວມທັງລະບົບການຮັບຄຳຕຳນິຕິຊົມຈາກກິດຈະກຳທ່ອງທ່ຽວ ແລະ ນັກທ່ອງທ່ຽວເອງ ກໍມີຄວາມຕື່ນຕົວ ແລະ ພ້ອມໃຫ້ຄວາມຮ່ວມມືໃນການໃຫ້ຄຳແນະນຳ ຫຼື ຕິຊົມເພື່ອສົ່ງເສີມໃຫ້ການບໍລິການທ່ອງທ່ຽວ/ກິດຈະກຳດີຂຶ້ນ. | ☐ | ☐ | ☐ | ☐ |
| 5.2.8 ລາຍການທ່ອງທ່ຽວ ຫຼື ບັນດາກິດຈະກຳຕ່າງໆຕ້ອງສອດຄ່ອງ ແລະ ຊ່ວຍສົ່ງເສີມການປົກປັກຮັກສາວັດທະນະທຳອັນດີງາມຂອງທ້ອງຖິ່ນ ແລະ ຊັບພະຍາກອນທຳມະຊາດ. | ☐ | ☐ | ☐ | ☐ |
| 5.2.9 ລາຍການທ່ອງທ່ຽວ/ກິດຈະກຳທ່ອງທ່ຽວແມ່ນຖືກສ້າງຂຶ້ນເພື່ອຄວາມເພີດເພີນ, ເພື່ອການສຶກສາ, ການແລກປ່ຽນ, ການມີສ່ວນຮ່ວມ, ເພື່ອການພັດທະນາ, ການເຊື່ອມໂຍງ ແລະ ການອະນຸລັກ. | ☐ | ☐ | ☐ | ☐ |
| <u>ມາດຖານສູງສຸດ</u> | | | | |
| 5.2.10 ພະນັກງານນຳທ່ຽວຂັ້ນທ້ອງຖິ່ນ 1 ຄົນສາມາດໃຫ້ບໍລິການແຂກໄດ້ 5-10 ຄົນ. | ☐ | ☐ | ☐ | ☐ |
| 5.2.11 ລາຍການທ່ອງທ່ຽວ/ກິດຈະກຳທີ່ກ່ຽວຂ້ອງ ຕ້ອງມີສັນຍາທີ່ລະບຸ ແລະບັນທຶກໄວ້ຢ່າງຊັດເຈນວ່າ ເປັນບໍລິສັດທ່ອງທ່ຽວພາຍໃນ. | ☐ | ☐ | ☐ | ☐ |
| 5.2.12 ລາຍການທ່ອງທ່ຽວ/ກິດຈະກຳທ່ອງທ່ຽວ ແມ່ນອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນວັດທະນະທຳ ແລະ ເປີດໂອກາດໃຫ້ນັກທ່ອງທ່ຽວ ໄດ້ປະກອບເຮັດກິດຈະກຳໃນຊຸມຊົນນັ້ນໆ. | ☐ | ☐ | ☐ | ☐ |
| 5.2.13 ການຈັດການການນຳທ່ຽວແມ່ນມີຄວາມເໝາະສົມ ແລະ ມີຄວາມເອົາໃຈໃສ່ໃນການບໍລິການທີ່ມີຄວາມຊຳນານເປັນພິເສດ ເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງລູກຄ້າເປົ້າໝາຍ ແລະ ດຶງດູດນັກທ່ອງທ່ຽວທີ່ມີຄຸນນະພາບໃຫ້ຫລາຍ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

## ມາດຖານ 6: ຄຸນນະພາບຂອງການບໍລິການອາຫານ ແລະ ເຄື່ອງດື່ມ

ມາດຕະຖານອາຫານ ແລະ ເຄື່ອງດື່ມສາມາດຕອບສະໜອງໃນຂົງເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທີ່ເປັນເປົ້າໝາຍສຳລັບນັກທ່ອງທ່ຽວ ອັນເປັນສ່ວນໜຶ່ງໃນກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມນີ້.

### ມາດຖານຍ່ອຍ 6.1: <u>ຮັບປະກັນຄຸນນະພາບຂອງຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມ</u>

| ຕົວຊີ້ວັດ | ໄດ້ຄົບມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| <u>ມາດຖານຕ່ຳສຸດ</u> | | | | |
| 6.1.1 ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມ ແມ່ນຕ້ອງອີງຕາມ | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| ຄວາມ ເໝາະສົມດ້ານຄວາມຮູ້ ແລະ ປະສົບການທີ່ຕິດພັນກັບການບໍລິການອາຫານ ແລະ ເຄື່ອງດື່ມທີ່ກ່ຽວຂ້ອງກັບທ້ອງຖິ່ນ. | | | | |
| 6.1.2 ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມອາດສາທິດວິທີການກະກຽມກ່ອນການປຸງແຕ່ງອາຫານທີ່ຖືກຫຼັກສຸຂະອະນາໄມ. | ☐ | ☐ | ☐ | ☐ |
| 6.1.3 ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງປະຕິບັດຕາມບົດແນະນຳ ແລະ ກົດລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຕ້ອງໄດ້ເຊັນສັນຍາ ແລະ ປະຕິບັດຕາມກົດລະບຽບການບໍລິການອາຫານ ແລະ ເຄື່ອງດື່ມຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ (ເອກະສານຊ້ອນທ້າຍ 3). | ☐ | ☐ | ☐ | ☐ |
| <u>ມາດຖານສູງ</u> | | | | |
| 6.1.4 ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໄດ້ຜ່ານການຮັບຮອງພາຍໃຕ້ມາດຕະຖານທີ່ກ່ຽວຂ້ອງ ເພື່ອແນ່ໃສ່ປັບປຸງການບໍລິການອາຫານ ແລະ ເຄື່ອງດື່ມໃຫ້ດີຂຶ້ນ. | ☐ | ☐ | ☐ | ☐ |
| 6.1.5 ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງເປີດໂອກາດໃນການແລກປ່ຽນຄວາມຮູ້ໃໝ່ຢູ່ສະເໝີຈາກແຂກຜູ້ມາໃຊ້ບໍລິການ. | ☐ | ☐ | ☐ | ☐ |
| 6.1.6 ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໄດ້ເຂົ້າຮ່ວມໃນການຝຶກອົບຮົມເພື່ອເພີ່ມທັກສະ ແລະ ຄວາມຮູ້ດ້ານ:<br>• ສຸຂະນາໄມໃນຂັ້ນຕອນການກະກຽມປຸງແຕ່ງອາຫານ.<br>• ໂພຊະນາການ ແລະ ການຈັດກຽມລາຍການອາຫານ.<br>• ອາຫານພື້ນບ້ານ ແລະ ເຕັກນິກການປຸງແຕ່ງອາຫານ.<br>• ມາດຕະຖານການບໍລິການ ແລະ ການຕ້ອນຮັບ.<br>• ການທ່ອງທ່ຽວແບບຍືນຍົງ.<br>• ການບໍລິຫານວຽກງານເປັນກຸ່ມ.<br>• ການບໍລິການ/ການເອົາໃຈໃສ່ລູກຄ້າ.<br>• ການສື່ສານ (ລວມເຖິງການຮັບຮູ້ວັດທະນະທຳ/ຄວາມເຂົ້າໃຈວັດທະນະທຳຕ່າງໆ .ແລະ ການສື່ສານທາງດ້ານພາສາ).<br>• ການປະຖົມພະຍາບານເບື້ອງຕົ້ນ ແລະ ຄວາມປອດໄພ.<br>• ມີຄວາມຮັບຮູ້ທາງດ້ານວັດທະນະທຳຮີດຄອງປະເພນີທີ່ແທ້ຈິງ, ມີຄວາມອຸດົມສົມບູນມີເອກະລັກ ແລະ ມີຄຸນຄ່າ.<br>• ມີການປົກປັກຮັກສາສິ່ງແວດລ້ອມ.<br>• ມີການແນະນຳ ແລະ ປະຕິບັດລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.<br>• ຫົວຂໍ້ອື່ນໆທີ່ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນສ່ວນຮ່ວມເຫັນວ່າມີຄວາມສຳຄັນ/ຈຳເປັນ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

### ມາດຖານຍ່ອຍ 6.2: ຄຸນນະພາບຂອງການບໍລິການອາຫານ ແລະ ເຄື່ອງດື່ມ

| ຕົວຊີ້ວັດ | ໄດ້ຄົບມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 6.2.1 ການບໍລິການອາຫານ ແລະ ເຄື່ອງດື່ມ ແມ່ນປະຕິບັດຕາມຈຸດປະສົງ, ຄໍາແນະນໍາ, ລະບຽບ ແລະ ຫລັກການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ☐ | ☐ | ☐ | ☐ |
| 6.2.2 ລາຍການອາຫານທຸກຢ່າງຕ້ອງບອກລາຄາທີ່ຈະແຈ້ງ ແລະ ລະອຽດຢູ່ປື້ມລາຍການອາຫານ (ຖ້າມີ). | ☐ | ☐ | ☐ | ☐ |
| 6.2.3 ອາຫານສາມາດບໍລິການລູກຄ້າໄດ້ຕາມກໍານົດເວລາ ທີ່ຕົກລົງກັນລະຫວ່າງຜູ້ໃຫ້ບໍລິການອາຫານ ແລະ ເຄື່ອງດື່ມ ແລະ ຄະນະຮັບຜິດຊອບ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. | ☐ | ☐ | ☐ | ☐ |
| 6.2.4 ມີອາຫານພຽງພໍໄວ້ບໍລິການຕາມຄວາມຕ້ອງການຂອງນັກທ່ອງທ່ຽວລວມທັງອາຫານວ່າງ. | ☐ | ☐ | ☐ | ☐ |
| 6.2.5 ລາຍການອາຫານແຕກຕ່າງກັນໃນແຕ່ລະມື້ ແລະ ມີອາຫານພື້ນບ້ານຢ່າງໜ້ອຍໜຶ່ງເຢື່ອງໃນແຕ່ລະຄາບ. | ☐ | ☐ | ☐ | ☐ |
| 6.2.6 ອາຫານຕ້ອງສົດ, ປອດສານພິດ ແລະ ປຸງແຕ່ງດ້ວຍວັດຖຸດິບຂອງທ້ອງຖິ່ນເຊັ່ນ: ຊີ້ນ ແລະ ຜັກສົດ, ແຕ່ບໍ່ມີສັດປ່າທີ່ຜິດກົດໝາຍ. | ☐ | ☐ | ☐ | ☐ |
| 6.2.7 ອາຫານແຕ່ລະຄາບ ຕ້ອງມີຂອງຫວານ ແລະ ໝາກໄມ້. | ☐ | ☐ | ☐ | ☐ |
| 6.2.8 ການກະກຽມປຸ່ງແຕ່ງອາຫານ ແລະ ບ່ອນປຸງແຕ່ງອາຫານຕ້ອງສະອາດ. | ☐ | ☐ | ☐ | ☐ |
| 6.2.9 ອຸປະກອນຕ່າງໆ ທີ່ນໍາໃຊ້ປຸງແຕ່ງອາຫານຕ້ອງທໍາຄວາມສະອາດ ກ່ອນ ແລະ ຫຼັງປຸງແຕ່ງທຸກຄັ້ງ (ຕ້ອງທໍາຄວາມສະອາດທັນທີທີ່ປຸງແຕ່ງອາຫານແລ້ວ). | ☐ | ☐ | ☐ | ☐ |
| 6.2.10 ຜູ້ປຸງແຕ່ງອາຫານຕ້ອງລ້າງມືດ້ວຍສະບູໃຫ້ສະອາດທຸກຄັ້ງກ່ອນ ແລະ ຂະນະປຸງແຕ່ງອາຫານ. | ☐ | ☐ | ☐ | ☐ |
| 6.2.11 ຄວນເກັບຮັກສາອາຫານໄວ້ບ່ອນທີ່ສະອາດ ແລະ ຖືກສຸຂະອະນາໄມ. | ☐ | ☐ | ☐ | ☐ |
| 6.2.12 ບໍ່ໃຫ້ມີສັດລ້ຽງເຂົ້າມາໃນເຮືອນຄົວໃນເວລາປຸງແຕ່ງອາຫານ. | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 6.2.13 ນັກທ່ອງທ່ຽວສາມາດສ້າງປະສົບການທີ່ດີໃນການຮຽນຮູ້ ແລະ ທົດລອງການປຸງແຕ່ງອາຫານພື້ນບ້ານ. | ☐ | ☐ | ☐ | ☐ |
| 6.2.14 ມີລະບົບຄວບຄຸມ ແລະ ປັບປຸງຄຸນນະພາບໃຫ້ດີຂຶ້ນ ເຊັ່ນ: ການຮັບເອົາຄໍາຕໍານິຕິຊົມ ຈາກນັກທ່ອງທ່ຽວກ່ຽວກັບປະສົບການໃນການ ຮັບປະທານອາຫານ ແລະ ຄໍາແນະນໍາຕ່າງໆຈາກນັກທ່ອງທ່ຽວທີ່ມາໃຊ້ບໍລິການ. | ☐ | ☐ | ☐ | ☐ |
| 6.2.15 ມີລາຍການອາຫານພິເສດສໍາລັບນັກທ່ອງທ່ຽວທີ່ຕ້ອງການຄວບຄຸມອາຫານ. | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |

| | | | | |
|---|---|---|---|---|
| 6.2.16 ການຫຸ້ມຫໍ່ອາຫານຄວນຫຼີກລ້ຽງການນຳໃຊ້ວັດສະດຸ ທີ່ບໍ່ເປັນມິດຕໍ່ສິ່ງແວດລ້ອມ, ຄວນເລືອກໃຊ້ວັດຖຸດິບຈາກທຳມະຊາດ ເຊັ່ນ: ໃບຕອງ. | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

## ມາດຖານ 7: ຄຸນນະພາບຂອງສະຖານທີ່ພັກເຊົາ

ສະຖານທີ່ພັກເຊົາຂອງການທ່ອງທ່ຽວແບບປະຊາແບບຊຸມຊົນມີສ່ວນຮ່ວມ ປະກອບມີ: ເຮືອນພັກແຮມປະຊາຊົນ, ຊຸມຊົນ ຫຼື ບັນດາເຮືອນພັກຕ່າງໆ ທີ່ໃຫ້ການບໍລິການແກ່ນັກທ່ອງທ່ຽວພາຍໃຕ້ບົດແນະນຳຂອງຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ໂດຍອີງໃສ່ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ. ໃນນັ້ນປະກອບມີສິ່ງອຳນວຍຄວາມສະດວກຕ່າງໆ ເຊັ່ນ: ບ່ອນຮັບປະທານອາຫານ ແລະ ໂຄງລ່າງພື້ນຖານອື່ນໆ.

### ມາດຖານຍ່ອຍ 7.1: ຮັບປະກັນຄຸນນະພາບຂອງຜູ້ໃຫ້ບໍລິການສະຖານທີ່ພັກເຊົາ

| ຕົວຊີ້ວັດ | ໄດ້ເປັນມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕ່ຳສຸດ | | | | |
| 7.1.1 ຜູ້ໃຫ້ບໍລິການສະຖານທີ່ພັກເຊົາ ຄວນມີຄວາມຮູ້ພື້ນຖານທີ່ດີໃນການບໍລິການ ແລະ ມີສິ່ງອຳນວຍຄວາມສະດວກ ທີ່ເໝາະສົມກັບກຸ່ມຕະຫຼາດ ເປົ້າໝາຍ | ☐ | ☐ | ☐ | ☐ |
| 7.1.2 ຜູ້ໃຫ້ບໍລິການສະຖານທີ່ພັກເຊົາຕ້ອງໄດ້ພັດທະນາໂຕເອງເຊັ່ນ: ຄວາມຮູ້, ວິທີການໃຫ້ບໍລິການທີ່ມີຄຸນນະພາບ ແລະ ການຮັກສາສະພາບແວດລ້ອມ ໃນທ້ອງຖິ່ນ, ວັດທະນະທຳ ແລະ ປະສົບການ ການທ່ອງທ່ຽວໃຫ້ມີຄວາມຍືນຍົງ. | ☐ | ☐ | ☐ | ☐ |

### ມາດຖານຍ່ອຍ 7.2: ຮັບປະກັນຄຸນນະພາບຂອງສະຖານທີ່ພັກເຊົາ

| ຕົວຊີ້ວັດ | ໄດ້ເປັນມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕ່ຳສຸດ | | | | |
| 7.2.1 ສະຖານທີ່ພັກເຊົາແມ່ນໄດ້ຕາມຈຸດປະສົງ, ບົດແນະນຳ, ລະບຽບການ ແລະ ຫລັກການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ☐ | ☐ | ☐ | ☐ |
| 7.2.2 ມີລະບົບການຈອງທີ່ລະອຽດ ແລະ ເປັນເອກະສານ ທີ່ມີການບັນທຶກ ຈຳນວນຜູ້ທີ່ມາໃຊ້ບໍລິການ ຢູ່ເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ມາໃຊ້ບໍລິການທີ່ພັກເຊົາ | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| 7.2.3 ມີການບັນທຶກການເດີນທາງເຂົ້າ - ອອກຂອງນັກທ່ອງທ່ຽວທີ່ມາໃຊ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ☐ | ☐ | ☐ | ☐ |
| 7.2.4 ເວລານັກທ່ອງທ່ຽວມາຮອດຈະໄດ້ຮັບຂໍ້ມູນ ກ່ຽວກັບ ຄວາມປອດໄພ, ລະບົບການຮັກສາຄວາມປອດໄພ ແລະ ຄຳແນະນຳດ້ານການປະພຶດຕ່າງໆ | ☐ | ☐ | ☐ | ☐ |
| 7.2.5 ຈຸດປະສົງໃນການປຸກສ້າງສິ່ງອຳນວຍຄວາມສະດວກຕ່າງໆ ສາມາດ ດຶງດູດນັກທ່ອງທ່ຽວ ແລະ ມີການຈັດສັນພື້ນທີ່ໄວ້ສຳລັບປະຊຸມ ແລະ ມີມາດຕະຖານຄວາມປອດໄພເບື້ອງຕົ້ນ | ☐ | ☐ | ☐ | ☐ |
| 7.2.6 ຫ້ອງອາບນໍ້າ ແລະ ຫ້ອງນໍ້າຕ້ອງມີຄວາມເປັນສ່ວນຕົວ ແລະ ມີບ່ອນລະບາຍອາກາດດີ, ໂດຍບໍ່ໃຫ້ໃຊ້ຮ່ວມກັບສະມາຊິກໃນຄອບຄົວຂອງຜູ້ໃຫ້ບໍລິການ. | ☐ | ☐ | ☐ | ☐ |
| 7.2.7 ຫ້ອງພັກທັງຫມົດ, ໂດຍສະເພາະແມ່ນ ຫ້ອງອາບນໍ້າ ແລະ ຫ້ອງນໍ້າຕ້ອງອະນາໄມໃຫ້ສະອາດທຸກມື້ | ☐ | ☐ | ☐ | ☐ |
| 7.2.8 ຫ້ອງອາບນໍ້າ ແລະ ຫ້ອງນໍ້າຄວນມີອ່າງເກັບນໍ້າທີ່ພຽງພໍ, ນໍ້າສະອາດ, ສະບູ ແລະ ຈອກ; ສ່ວນຫ້ອງນໍ້າຄວນມີເຈ້ຍອະນາໄມ ແລະ ຖັງໃສ່ຂີ້ເຫຍື້ອ | ☐ | ☐ | ☐ | ☐ |
| 7.2.9 ຫ້ອງນໍ້າ ມີທັງແບບນັ່ງຍອງຍໍ້ ຫຼື ແບບນັ່ງ ແລະ ສາມາດດູດອອກ ຫຼື ຍ່ອຍສະຫຼາຍໄດ້ຕາມຄວາມເໝາະສົມຂອງແຕ່ລະທ້ອງຖິ່ນ | ☐ | ☐ | ☐ | ☐ |
| 7.2.10 ພື້ນທີ່ໃຫ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕ້ອງມີຄວາມ ສະອາດງາມຕາ ເພື່ອປ້ອງກັນບໍ່ໃຫ້ມີສັດສາວາສິ່ງທີ່ເປັນອັນຕະລາຍເຂົ້າມາ | ☐ | ☐ | ☐ | ☐ |
| 7.2.11 ສິ່ງອຳນວຍຄວາມສະດວກຢູ່ພາຍໃນສະຖານທີ່ພັກເຊົາ ຄວນໃຫ້ມີພຽງພໍສຳລັບການຮັບໃຊ້ນັກທ່ອງທ່ຽວ ແລະ ຄົນພາຍໃນຄອບຄົວ | ☐ | ☐ | ☐ | ☐ |
| 7.2.12 ສະຖານທີ່ພັກເຊົາທຸກແຫ່ງຕ້ອງມີໄຟສາຍ ຫລື ສິ່ງອື່ນໆໄວ້ໃຫ້ແຂກໃຊ້ | ☐ | ☐ | ☐ | ☐ |
| 7.2.13 ທຸກກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕ້ອງມີວິທີຮັບປະກັນ ຄວາມປອດໄພ ແລະ ຄວາມສະຫງົບໃຫ້ແກ່ນັກທ່ອງທ່ຽວ (ນັກທ່ອງທ່ຽວໄດ້ຮັບຮູ້ຂໍ້ມູນເຫລົ່ານີ້ໃນເວລາເດີນທາງມາຮອດ) | ☐ | ☐ | ☐ | ☐ |
| 7.2.14 ຕ້ອງມີແຜນການຮອງຮັບສຳລັບເຫດການທີ່ບໍ່ຄາດຄິດທີ່ອາດເກີດຂຶ້ນ ເຊັ່ນ:ນັກທ່ອງທ່ຽວເຈັບປ່ວຍ, ມີພຶດຕິກຳທີ່ບໍ່ພຶງປະສົງຈາກບຸກຄົນທົ່ວໄປ, ອຸປະຕິເຫດ ຫລື ບາດເຈັບ ຫຼື ສະພາບອາກາດມີການປ່ຽນແປງ | ☐ | ☐ | ☐ | ☐ |
| 7.2.15 ທຸກກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຄວນມີການແບ່ງ ໜ້າທີ່ຄວາມຮັບຜິດຊອບໃຫ້ລະອຽດໃນການຮັບມືກັບບັນຫາຕ່າງໆເຊັ່ນ: ເຄື່ອງມືປະຖົມພະຍາບານ ແລະ ຄວນມີການລວມປະຈຳອາທິດເພື່ອຖອດຖອນບົດຮຽນ | ☐ | ☐ | ☐ | ☐ |
| 7.2.16 ທຸກກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຄວນໃຊ້ມາດຕະຖານ ຄືກັນທັງຫມົດເຊັ່ນ: ການຮັກສາອະນາໄມ, ການບໍລິການອາຫານ ແລະ ເຄື່ອງດື່ມ | ☐ | ☐ | ☐ | ☐ |
| <u>ມາດຖານສູງ</u> | | | | |
| 7.2.17 ການຮັກສາຄຸນນະພາບ ແລະ ການປັບປຸງການບໍລິການທີ່ມີຢູ່ລວມທັງຄຳຄິດຄຳເຫັນຕໍ່ກັບສະຖານທີ່ພັກແຮມ ແລະ ໃຫ້ນັກທ່ອງທ່ຽວໄດ້ມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນເພື່ອປັບປຸງຄຸນນະພາບ | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| 7.2.18 ເພື່ອໃຫ້ສອດຄ່ອງກັບມາດຖານໃນການປະຕິບັດງານ, ໂຄງສ້າງຂອງ ທີ່ພັກອາໄສຕ້ອງເຮັດຕາມຮູບຊົງຂອງທ້ອງຖິ່ນ | ☐ | ☐ | ☐ | ☐ |
| 7.2.19  ສິ່ງປຸກສ້າງຕ່າງໆ ທີ່ໃຫ້ບໍລິການແກ່ນັກທ່ອງທ່ຽວຕ້ອງມີການ ກຳນົດຂອບເຂດຢ່າງລະອຽດ ແລະ ມີປ້າຍແນະນຳພ້ອມ (ໂດຍສະເພາະແມ່ນ ຂອບເຂດທີ່ເປັນທີ່ພັກອາໄສ ແລະ ພື້ນທີ່ສະເພາະຂອງນັກທ່ອງທ່ຽວ) | ☐ | ☐ | ☐ | ☐ |
| 7.2.20 ບໍລິເວນສິ່ງປຸກສ້າງຕ້ອງບໍ່ມີການຕົກແຕ່ງ ຈາກຊິ້ນສ່ວນຂອງສັດປ່າ ຍົກເວັ້ນບ່ອນທີ່ຈັດສະແດງສັດ ຫຼື ສະເພາະນັກທ່ອງທ່ຽວພາຍໃນ | ☐ | ☐ | ☐ | ☐ |
| 7.2.21 ພາຍໃນສິ່ງປຸກສ້າງຕ້ອງມີແສງສະຫວ່າງພຽງພໍ ແລະ ມີອາກາດຖ່າຍເທສະດວກ | ☐ | ☐ | ☐ | ☐ |
| 7.2.22  ສິ່ງປຸກສ້າງຕ່າງໆ ຕ້ອງຫ່າງຈາກສະຖານທີ່ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດອື່ນໆຢ່າງໜ້ອຍ 20 ແມັດ, ເວັ້ນເສຍແຕ່ມີເຫດຜົນອື່ນທີ່ຈຳເປັນ | ☐ | ☐ | ☐ | ☐ |
| 7.2.23 ສະຖານທີ່ໃຫ້ບໍລິການແກ່ນັກທ່ອງທ່ຽວ ແມ່ນບໍ່ຄວນປ່ອຍສັດລ້ຽງເຂົ້າມາລົບກວນ | ☐ | ☐ | ☐ | ☐ |
| 7.2.24 ມີສະຖານທີ່ຈອດລົດ, ປ້າຍຊີ້ບອກຕ່າງໆ ສຳລັບນັກທ່ອງທ່ຽວ ແລະ ຜູ້ທີ່ມາທັດສະນະສຶກສາ | ☐ | ☐ | ☐ | ☐ |
| 7.2.25 ຜູ້ທີ່ໃຫ້ບໍລິການ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຕ້ອງໄດ້ຮັບການ ຝຶກອົບຮົມດ້ານການປະຖົມພະຍາບານເບື້ອງຕົ້ນ ເພື່ອໃຫ້ສາມາດຊ່ວຍເຫຼືອນັກທ່ອງທ່ຽວໃນກໍລະນີສຸກເສີນໄດ້ | ☐ | ☐ | ☐ | ☐ |
| 7.2.26 ຜູ້ໃຫ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທັງໝົດ ແລະ ນັກທ່ອງທ່ຽວທີ່ມາໃຊ້ບໍລິການ ຕ້ອງມີເອກະສານແນະນຳກ່ຽວກັບການແກ້ໄຂບັນຫາເບື້ອງຕົ້ນ, ລະບຸຕຳແໜ່ງອຸປະກອນສຸກເສີນຕ່າງໆ ໃຫ້ຊັດເຈນ | ☐ | ☐ | ☐ | ☐ |
| <u>ມາດຖານສູງສຸດ</u> | | | | |
| 7.2.27   ເນັ້ນໜັກໃຫ້ນັກທ່ອງທ່ຽວໄດ້ຮຽນຮູ້ປະສົບການຂອງການຢູ່ແບບຄອບຄົວ ແລະ ຮຽນຮູ້ວັດທະນະທຳທ້ອງຖິ່ນ | ☐ | ☐ | ☐ | ☐ |
| **ລວມຄະແນນທັງໝົດຂອງມາດຖານຕ່ຳສຸດ** | | | | |
| **ລວມຄະແນນທັງໝົດຂອງມາດຖານສູງ** | | | | |
| **ລວມທັງໝົດຂອງມາດຖານສູງສຸດ** | | | | |

**ມາດຖານ 8: ການຈັດຕັ້ງປະຕິບັດຂອງບໍລິສັດທ່ອງທ່ຽວ.**

ຜູ້ປະກອບດ້ານການທ່ອງທ່ຽວ ທີ່ເປັນມິດກັບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນຜູ້ປະກອບການທີ່ມີຄວາມຮັບຜິດຊອບທີ່ເອົາໃຈໃສ່ດ້ານຄວາມຍືນຍົງຂອງທຳມະຊາດ ແລະ ວັດທະນະທຳທີ່ມີຢູ່ໃນຂົງເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມຂອງຊຸມຊົນທ້ອງຖິ່ນ. ຜູ້ປະກອບການທ່ອງທ່ຽວທີ່ອາດຈະເກີດຂຶ້ນຈາກພາຍໃນ ຫຼື ພາຍນອກຊຸມຊົນ ຊຶ່ງໄດ້ຮັບອະນຸຍາດໃຫ້ດຳເນີນການພາຍໃຕ້ການເຫັນດີຈາກຄະນະຮັບຜິດຊອບ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຊຸມຊົນທ້ອງຖິ່ນ.

## ມາດຖານຍ່ອຍ 8.1: ພັນທະຂອງຜູ້ປະກອບການທຸລະກິດທ່ອງທ່ຽວ ຕໍ່ກັບການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ

| ຕົວຊີ້ວັດ | ໄດ້ຄົບມາດ ຖານ | ໄດ້ມາດຖານ ບາງສ່ວນ | ບໍ່ໄດ້ມາດ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 8.1.1 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງໄດ້ມາດຕະຖານທີ່ກ່ຽວຂ້ອງໃດໜຶ່ງ ເພື່ອເປັນການປັບປຸງການດໍາເນີນທຸລະກິດການທ່ອງທ່ຽວ (ເຊັ່ນ: ມາດຕະຖານການທ່ອງທ່ຽວອະນຸລັກອາຊຽນ) | ☐ | ☐ | ☐ | ☐ |
| 8.1.2 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງມີໃບອະນຸຍາດດໍາເນີນທຸລະກິດ | ☐ | ☐ | ☐ | ☐ |
| 8.1.3 ມີສັນຍາເປັນລາຍລັກອັກສອນຢ່າງລະອຽດ ລະຫວ່າງຜູ້ປະກອບການທ່ອງທ່ຽວ ແລະ ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໂດຍມີຄວາມຕ້ອງການໃຫ້ຜູ້ປະກອບການ ແລະ ພະນັກງານປະຕິບັດຕາມບົດແນະນໍາ ແລະ ລະບຽບ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ | ☐ | ☐ | ☐ | ☐ |
| 8.1.4 ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານຕ້ອງເຊັນສັນຍາ ແລະ ປະຕິບັດຕາມກົດລະບຽບ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ (ເອກະສານຊ້ອນທ້າຍ 5) | ☐ | ☐ | ☐ | ☐ |
| 8.1.5 ໃຫ້ຜູ້ປະກອບການທຸລະກິດທ່ອງທ່ຽວ ເຂົ້າເປັນສະມາຊິກຂອງອົງກອນວິຊາຊີບໃດໜຶ່ງ ຕາມຄວາມເໝາະສົມ | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 8.1.6 ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານຕ້ອງໄດ້ພັດທະນາຄວາມຮູ້ດ້ານການທ່ອງທ່ຽວແບບຍືນຍົງ ແລະ ວິທີບໍລິການທີ່ມີຄຸນນະພາບທີ່ກ່ຽວຂ້ອງກັບສະພາບແວດລ້ອມ, ວັດທະນະທໍາ ແລະ ການດໍາລົງຊີວິດໃນທ້ອງຖິ່ນ | ☐ | ☐ | ☐ | ☐ |
| 8.1.7 ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານທີ່ໃຫ້ບໍລິການຕ້ອງມີຄວາມຮັບຜິດຊອບຕໍ່ນັກທ່ອງທ່ຽວ ເພື່ອໃຫ້ນັກທ່ອງທ່ຽວໄດ້ມີປະສົບການຈາກວິຖີຊີວິດທ້ອງຖິ່ນ ແລະ ແລກປ່ຽນຄວາມຮູ້ຊຶ່ງກັນ ແລະ ກັນ ລະຫວ່າງຊຸມຊົນ ແລະ ນັກທ່ອງທ່ຽວ | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 8.1.8 ຜູ້ປະກອບການທຸລະກິດທ່ອງທ່ຽວໄດ້ຈັດຊຸດຝຶກອົບຮົມ ໃຫ້ພະນັກງານທີ່ກ່ຽວຂ້ອງກ່ຽວກັບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ການທ່ອງທ່ຽວອະນຸລັກ (ເຊັ່ນ: ປີລະເທື່ອ). | ☐ | ☐ | ☐ | ☐ |
| 8.1.9 ຜູ້ປະກອບການທຸລະກິດທ່ອງທ່ຽວ ມີການຮ່ວມມືກັບອົງກອນ, ອໍານາດການປົກຄອງ ແລະ ອົງການທີ່ບໍ່ສັງກັດລັດ ທີ່ອະນຸລັກມໍລະດົກທໍາມະຊາດ ແລະ ວັດທະນະທໍາ | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

ມາດຖານຍ່ອຍ 8.2: ການມີສ່ວນຮ່ວມຂອງຜູ້ປະກອບການທຸລະກິດ ທ່ອງທ່ຽວຕໍ່ກັບຊຸມຊົນ ແລະ ການປົກປັກຮັກສາທຳມະຊາດ

| ຕົວຊີ້ວັດ | ໄດ້ຕາມມາດຕະຖານ | ໄດ້ມາດຕະຖານບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 8.2.1 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງເຄົາລົບລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ການແນະນຳກ່ຽວກັບການຮັກສາສະພາບແວດລ້ອມຢູ່ໃນຂົງເຂດ ແລະ ຢູ່ໃນຊຸມຊົນທີ່ມີຄວາມລະອຽດອ່ອນ | ☐ | ☐ | ☐ | ☐ |
| 8.2.2 ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານຕ້ອງມີຄວາມຮູ້ ແລະ ຄວາມເຂົ້າໃຈດີກ່ຽວກັບພື້ນທີ່ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຮີດຄອງປະເພນີທ້ອງຖິ່ນ | ☐ | ☐ | ☐ | ☐ |
| 8.2.3 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງສະແດງໃຫ້ເຫັນເຖິງການດຳເນີນງານ ໃນການປົກປັກຮັກສາສິ່ງແວດລ້ອມ (ຕົວຢ່າງ: ການນຳໃຊ້ຜະລິດຕະພັນທີ່ມີປະສິດທິ ພາບ, ຫຼຸດຜ່ອນສິ່ງເສດເຫຼືອ ແລະ ເອົາມາໃຊ້ຄືນໄດ້). | ☐ | ☐ | ☐ | ☐ |
| 8.2.4 ຜູ້ປະກອບການທຸລະກິດທ່ອງທ່ຽວ ຄວນຫຼຸດຜ່ອນການນຳໃຊ້ເຄື່ອງຈັກ ໃນການຂົນສົ່ງ, ໂດຍສະເພາະແມ່ນ ຢູ່ໃນເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 8.2.5 ຜູ້ປະກອບການທຸລະກິດທ່ອງທ່ຽວຄວນປຶກສາຫາລື ກັບ ຄະນະກຳມະການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຊຸມຊົນ ໃນກໍລະນີມີຄວາມສ່ຽງທີ່ອາດ ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນທ້ອງຖິ່ນໂດຍກົງ. | ☐ | ☐ | ☐ | ☐ |
| 8.2.6 ຜູ້ປະກອບການທຸລະກິດທ່ອງທ່ຽວ ບໍ່ຄວນນຳໃຊ້ຜະລິດຕະພັນທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ເຂົ້າມາໃນພື້ນທີ່ການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ | ☐ | ☐ | ☐ | ☐ |
| 8.2.7 ຜູ້ປະກອບການທຸລະກິດທ່ອງທ່ຽວທີ່ດີ ຄວນມີວິທີການຫຼຸດຜ່ອນຜົນກະທົບ ທີ່ອາດຈະເກີດຂຶ້ນຕໍ່ທຳມະຊາດ, ວັດທະນະທຳ ແລະ ຊຸມຊົນທ້ອງຖິ່ນ | ☐ | ☐ | ☐ | ☐ |
| 8.2.8 ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານ ຕ້ອງມີສ່ວນຮ່ວມ ຫຼື ປະກອບສ່ວນເຂົ້າໃສ່ບັນດາໂຄງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | | | | |
| 8.2.9 ຜູ້ປະກອບການທ່ອງທ່ຽວ ຄວນມີການເຮັດວຽກຮ່ວມກັບຊຸມຊົນທ້ອງຖິ່ນໃນການປັບປຸງການບໍລິການຂອງຊຸມຊົນ ແລະ ຜະລິດຕະພັນຕ່າງໆ ໂດຍອີງໃສ່ ຄຳຄິດຄຳເຫັນຂອງນັກທ່ອງທ່ຽວ | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 8.2.10 ຜູ້ປະກອບການທຸລະກິດທ່ອງທ່ຽວ ໄດ້ສະໜັບສະໜູນຄະນະກຳມະການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃນການຝຶກອົບຮົມພະນັກງານນຳທ່ຽວທ້ອງຖິ່ນ ແລະ ພະນັກງານອະນຸລັກສັດປ່າຈາກຄົນທ້ອງຖິ່ນທີ່ມີຄວາມຊຳນານ | ☐ | ☐ | ☐ | ☐ |
| 8.2.11 ຖ້າເປັນໄປໄດ້, ຜູ້ປະກອບການທຸລະກິດທ່ອງທ່ຽວຄວນນຳໃຊ້ສະຖານທີ່ພັກເຊົາ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມກ່ອນ ແລະ ຫຼັງການຢ້ຽມ | ☐ | ☐ | ☐ | ☐ |

| | | | | |
|---|---|---|---|---|
| ຢາມ ເຂດທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | | | | |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |





มາດຖານຍ່ອຍ 8.3: ການສົ່ງເສີມເສດຖະກິດທ້ອງຖິ່ນ

| ຕົວຊີ້ວັດ | ໄດ້ຕາມມາດຕະຖານ | ໄດ້ມາດຕະຖານ ບາງສ່ວນ | ບໍ່ໄດ້ມາດຕະ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 8.3.1 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງນຳໃຊ້ ຫຼື ຊື້ຜະລິດຕະພັນ ແລະ ການບໍລິການປະຊາຊົນພາຍໃນທ້ອງຖິ່ນ (ຕົວຢ່າງ: ສະຖານທີ່ພັກເຊົາ, ການຂົນສົ່ງ ເຂົ້າ-ອອກ, ກິດຈະກຳຕ່າງໆ, ອາຫານ, ຂອງທີ່ລະນຶກ) | | ☐ | ☐ | ☐ |
| 8.3.2 ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງມີຂໍ້ຕົກລົງຫຼື ສັນຍາກັບຊຸມຊົນທ້ອງຖິ່ນ ກ່ຽວກັບການນຳໃຊ້ການບໍລິການ, ລາຄາ ແລະ ຂັ້ນຕອນການທ່ອງທ່ຽວແບບປະຊາຊົນ ມີສ່ວນຮ່ວມ | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 8.3.3 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງສະໜອງຂໍ້ມູນໃຫ້ຄະນະຮັບຜິດ ຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມກ່ຽວກັບທ່າແຮງຂອງການບໍລິການທີ່ສາມາດເພີ່ມລາຍຮັບໃຫ້ແກ່ຊຸມຊົນໄດ້. | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 8.3.4 ຜູ້ປະກອບການທຸລະກິດທ່ອງທ່ຽວ, ພະນັກງານ ແລະ ນັກທ່ອງທ່ຽວຕ້ອງໄດ້ປະກອບສ່ວນ ຫຼື ມີສ່ວນຮ່ວມເຂົ້າໃສ່ວຽກງານພັດທະນາຊຸມຊົນ (ເຊັ່ນ: ໂຄງການຂອງໝູ່ບ້ານ, ການສຶກສາ, ການບຳລຸງຮັກສາຖະໜົນຫົນທາງ, ແລະ ອື່ນໆ) | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |

## ມາດຖານຍ່ອຍ 8.4: ການໂຄສະນາ ລາຍການທ່ອງທ່ຽວ, ຄວາມຮູ້ ແລະ ປະສົບການທ້ອງຖິ່ນ

| ຕົວຊີ້ວັດ | ໄດ້ຄົບມາດຕະ | ໄດ້ມາດຕະຖານ ບາງສ່ວນ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| <u>ມາດຖານຕໍ່າສຸດ</u> | | | | |
| 8.4.1 ຮ່ວມມືກັບພະນັກງານນໍາທ່ຽວຂັ້ນທ້ອງຖິ່ນ, ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງຈັດລາຍການນໍາທ່ຽວ ແລະ ຕີຄວາມໝາຍດ້ານວັດທະນະທໍາ/ທໍາມະຊາດທີ່ເປັນເອກະລັກ ຄຸນຄ່າທາງວັດທະນະທໍາ ແລະ ທໍາມະຊາດໃນເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ☐ | ☐ | ☐ | ☐ |
| 8.4.2 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງອະທິບາຍລະບຽບການແກ່ ນັກທ່ອງທ່ຽວ, ໂດຍເນັ້ນໃສ່ຄວາມຮັບຜິດຊອບຂອງນັກທ່ອງທ່ຽວໃນການເຄົາລົບຄົນທ້ອງຖິ່ນ ແລະ ຫຼີກເວັ້ນຜົນກະທົບຕໍ່ສິ່ງແວດລ້ອມ | ☐ | ☐ | ☐ | ☐ |
| 8.4.3 ອີງຕາມສັນຍາກັບຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ , ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງຈໍາກັດຈໍານວນນັກທ່ອງທ່ຽວຂຶ້ນກັບສະພາບຂອງພື້ນທີ່ ແລະ ຈໍານວນນັກທ່ອງທ່ຽວ, ຈຸດປະສົງແມ່ນເພື່ອສະໜອງປະສົບ ການໃຫ້ແກ່ນັກທ່ອງທ່ຽວ ທີ່ບໍ່ສົ່ງຜົນກະທົບຕໍ່ຊຸມຊົນ | ☐ | ☐ | ☐ | ☐ |
| <u>ມາດຖານສູງ</u> | | | | |
| 8.4.4 ຜູ້ປະກອບການທຸລະກິດທ່ອງທ່ຽວ ຄວນມີຄວາມຮູ້ກ່ຽວກັບວັດທະນະທໍາ ແລະ ທໍາມະຊາດຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ສາມາດຖ່າຍທອດຄວາມ ຮູ້ດັ່ງກ່າວໃຫ້ແກ່ພະນັກງານຂອງຕົນໂດຍສະເພາະແມ່ນພະນັກງານນໍາທ່ຽວ ແລະ ຫົວໜ້າທົວ. | ☐ | ☐ | ☐ | ☐ |
| 8.4.5 ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງສະໜອງຂໍ້ມູນຂອງການທ່ອງທ່ຽວ ທີ່ຖືກຕ້ອງໃຫ້ແກ່ນັກທ່ອງທ່ຽວກ່ຽວກັບຂອບເຂດຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ອຸປະກອນທີ່ຈໍາເປັນ ແລະ ລະບຽບການຕ່າງໆ ທີ່ມີມາດຕະຖານສູງສຸດ | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |

## ມາດຖານຍ່ອຍ 8.5: ການສ້າງຄວາມເພິ່ງພໍໃຈ ແລະ ຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ແລະ ຊຸມຊົນ

| ຕົວຊີ້ວັດ | ໄດ້ຕາມມາດຕະ | ໄດ້ມາດຕະຖານ | ບໍ່ໄດ້ມາດຕະຖານ | ໃຊ້ການບໍ່ໄດ້ |
|---|---|---|---|---|
| ມາດຖານຕໍ່າສຸດ | | | | |
| 8.5.1 ຜູ້ປະກອບການທຸລະກິດທ່ອງທ່ຽວ ຄວນແນະນໍາໃຫ້ນັກທ່ອງທ່ຽວມີປະກັນໄພເດີນທາງ. | ☐ | ☐ | ☐ | ☐ |
| 8.5.2 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງຮັບປະກັນບັນດາກິດຈະກໍາທີ່ມີຄວາມສ່ຽງສູງ ຊຶ່ງຕ້ອງມີການນໍາທ່ຽວ ແລະ ຊ່ວຍເຫລືອຈາກພະນັກງານ ຫຼື ພະນັກງານນໍາທ່ຽວທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄວາມຊໍານານ. | ☐ | ☐ | ☐ | ☐ |
| ມາດຖານສູງ | | | | |
| 8.5.3 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງເຮັດການຕະຫລາດໃຫ້ຖືກຕາມຄວາມຄາດຫວັງຂອງລູກຄ້າຢ່າງເໝາະສົມກັບພື້ນທີ່ ແລະ ກິດຈະກໍາຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ | ☐ | ☐ | ☐ | ☐ |
| 8.5.4 ຜູ້ປະກອບການທ່ອງທ່ຽວ ແລະ ພະນັກງານຕ້ອງໄດ້ຮັບການຝຶກອົບຮົມການປະຖົມພະຍາບານເບື້ອງຕົ້ນ | ☐ | ☐ | ☐ | ☐ |
| ມາດຖານສູງສຸດ | | | | |
| 8.5.5 ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງມີການປັບປຸງຄຸນນະພາບຂອງການປະຕິບັດງານເປັນປະຈໍາ ຕາມການສໍາຫຼວດຄໍາຄິດຄໍາເຫັນຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ | ☐ | ☐ | ☐ | ☐ |
| ລວມຄະແນນທັງໝົດຂອງມາດຖານຕໍ່າສຸດ | | | | |
| ລວມຄະແນນທັງໝົດຂອງມາດຖານສູງ | | | | |
| ລວມທັງໝົດຂອງມາດຖານສູງສຸດ | | | | |



## ເອກະສານຊ້ອນທ້າຍ 1

ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດ ສໍາລັບສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.

| | |
|---|---|
| | ຄໍາປະຕິຍານໃນການຍົກລະດັບຄວາມຮູ້ຄວາມສາມາດ ແລະ ການສື່ສານໃຫ້ມີປະສິດທິພາບ. |
| ☐ | ຂ້າພະເຈົ້າຈະຊອກຮູ້ຮໍ່າຮຽນ ເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ຕົນເອງ ທາງດ້ານການໃຫ້ບໍລິການນັກທ່ອງທ່ຽວ ໃນຂົງເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະພະຍາຍາມຊອກຮູ້ຮໍ່າຮຽນ ເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ຕົນເອງ ເຊັ່ນ: (1) ວິທີການຄຸ້ມຄອງນັກທ່ອງທ່ຽວ, (2) ເຕັກນິກການສື່ສານ (ສ້າງຄວາມເຂົ້າໃຈກ່ຽວກັບວັດທະນະທໍາຕ່າງໆ ແລະ ສື່ສານທາງດ້ານພາສາ), ແລະ (3) ການປະຖົມພະຍາບານເບື້ອງຕົ້ນ ແລະ ຄວາມປອດໄພ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະພະຍາຍາມຊອກຮູ້ຮໍ່າຮຽນ ເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ຕົນເອງທາງດ້ານສິ່ງແວດລ້ອມ ແລະ ວັດທະນະທໍາຂອງທ້ອງຖິ່ນເຊັ່ນ: ປະຫວັດຄວາມເປັນມາ, ວັດທະນະທໍາ ແລະ ຮີດຄອງປະເພນີ, ພູມສາດ, ພືດ ແລະ ສັດຊະນິດຕ່າງໆຢູ່ຊຸມຊົນ ແລະ ຫຼັກການທ່ອງທ່ຽວແບບຍືນຍົງ (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນວ່າຈະສະໜອງຂໍ້ມູນ ທາງດ້ານສະພາບແວດລ້ອມ ແລະ ວັດທະນະທໍາໃຫ້ມີຄວາມຖືກຕ້ອງຊັດເຈນໃນເວລາທີ່ຂ້າພະເຈົ້າສື່ສານກັບນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | ຈັນຍາບັນໃນການປະຕິບັດວຽກງານ |
| ☐ | ຂ້າພະເຈົ້າຈະເປັນມິດທີ່ດີ, ມີມາລະຍາດ, ມີຄວາມອ່ອນນ້ອມຖ່ອມຕົນ ແລະ ຊື່ສັດສຸດຈະລິດຕໍ່ກັບຊຸມຊົນ ແລະ ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າມີຄວາມພາກພູມໃຈໃນການນໍາສະເໜີຂໍ້ມູນຕ່າງໆ ກ່ຽວກັບຊຸມຊົນຂອງຕົນເອງໃຫ້ແກ່ນັກທ່ອງທ່ຽວ ແລະ ຈະເປັນແບບຢ່າງທີ່ດີໃຫ້ແກ່ສະມາຊິກຄົນອື່ນໆໃນຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະບໍ່ກ່ຽວຂ້ອງກັບກິດຈະກໍາຕ່າງໆ ທີ່ຜິດຕໍ່ລະບຽບກົດໝາຍ ເຊັ່ນ: ການທ່ອງທ່ຽວທາງເພດ, ການຄ້າ-ຂາຍຢາເສບຕິດ, ການໃຊ້ແຮງງານເດັກ ຫຼື ການຄ້າມະນຸດ. ແຕ່ຂ້າພະເຈົ້າຈະສົ່ງເສີມ ແລະ ຍຶດຖືຫຼັກການຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເຄົາລົບນັບຖືສິດ ແລະ ສຽງຂອງສະມາຊິກທຸກຄົນໃນຊຸມຊົນ ແລະ ເປີດໂອກາດໃຫ້ສະມາຊິກທຸກຄົນມີສ່ວນຮ່ວມເຮັດກິດຈະກໍາຕ່າງໆເທົ່າທຽມກັນ ເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ ແລະ ຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | ການປົກປັກຮັກສາມໍລະດົກທາງທໍາມະຊາດ ແລະ ວັດທະນະທໍາ |
| ☐ | ຂ້າພະເຈົ້າຈະເຄົາລົບນັບຖື ແລະ ມີສ່ວນຮ່ວມໃນການຊຸກຍູ້ສົ່ງເສີມ ແລະ ອະນຸລັກຮີດຄອງປະເພນີ ແລະ ຊັບພະຍາກອນທໍາມະຊາດຂອງຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະພະຍາຍາມໃນການອະທິບາຍ ໃຫ້ນັກທ່ອງທ່ຽວປະຕິບັດຕາມຂໍ້ກໍານົດ ແລະ ກົດລະບຽບຕ່າງໆຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໃນການທ່ຽວຊົມໃນຊຸມຊົນ ເພື່ອຫຼີກລ້ຽງບໍ່ໃຫ້ເກີດຜົນກະທົບດ້ານລົບຕໍ່ກັບຊັບພະຍາກອນທໍາມະຊາດ, ວັດທະນະທໍາ ແລະ ປະຊາຊົນໃນຊຸມຊົນ (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ສ້າງຄວາມເຂົ້າໃຈ ກ່ຽວກັບຄວາມແຕກຕ່າງທາງດ້ານວັດທະນະທໍາ ລະຫວ່າງວັດທະນະທໍາຂອງນັກທ່ອງທ່ຽວ ແລະ ຊຸມຊົນ ແລະ ເປີດໂອກາດ ໃຫ້ນັກທ່ອງທ່ຽວໄດ້ມີສ່ວນຮ່ວມ ເຂົ້າໃນກິດຈະກໍາຕ່າງໆກັບຊຸມຊົນ ເພື່ອເປັນການສ້າງຄວາມເຂົ້າໃຈທີ່ດີ ແລະ ສົ່ງເສີມວັດທະນະທໍາ ຂອງຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເປັນແບບຢ່າງທີ່ດີໃຫ້ແກ່ສະມາຊິກໃນຊຸມຊົນ ແລະ ນັກທ່ອງທ່ຽວ ໃນການຈັດການກັບຂີ້ເຫຍື້ອ/ສິ່ງເສດເຫຼືອ ໂດຍປະຕິບັດຕາມຫຼັກການ 3 Rs: Reduce (ໃຊ້ໜ້ອຍລົງ), Reuse (ນໍາມາໃຊ້ຄືນ), Recycle (ນໍາມາຜະລິດຄືນ). (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະປະຕິບັດຕາມລະບຽບຫຼັກການ ແລະ ກົດໝາຍຕ່າງໆ ເຊັ່ນ: ການປົກປັກຮັກສາສິ່ງແວດລ້ອມ, ສັດປ່າ ແລະ ອື່ນໆທີ່ກ່ຽວຂ້ອງ. (ເປັນສິ່ງທີ່ຕ້ອງປະຕິບັດ) |

| | |
|---|---|
| | <u>ການເອົາໃຈໃສ່ ແລະ ການຮັກສາຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ</u> |
| ☐ | ຂ້າພະເຈົ້າຈະປະຕິບັດຕາມນະໂຍບາຍ ແລະ ລະບຽບຫຼັກການຕ່າງໆຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະກະກຽມເຄື່ອງປະຖົມພະຍາບານທຸກຄັ້ງ ເມື່ອປະຕິບັດວຽກງານການນຳທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະນຸ່ງເຄື່ອງແບບຕາມທີ່ຄະນະຮັບຜິດຊອບໄດ້ກຳນົດໃຫ້ ແລະ ຖືບັດພະນັກງານທຸກໆຄັ້ງ ເມື່ອດຳເນີນການນຳທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະກະກຽມຄວາມພ້ອມ ໃນການຕິດຕໍ່ປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນກໍລະນີທີ່ນັກທ່ອງທ່ຽວໄດ້ຮັບອຸປະຕິເຫດ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ການໃຫ້ບໍລິການນັກທ່ອງທ່ຽວທີ່ມີຄຸນນະພາບ</u> |
| ☐ | ຂ້າພະເຈົ້າຈະໃຫ້ບໍລິການແກ່ນັກທ່ອງທ່ຽວແບບມືອາຊີບ ໂດຍມີການກະກຽມ ແລະ ວາງແຜນບັນດາກິດຈະກຳຕ່າງໆທີ່ຈະຈັດຕັ້ງປະຕິບັດ ໄວ້ລ່ວງໜ້າເປັນຢ່າງດີ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະບໍ່ພົວພັນ ແລະ ມີສ່ວນກ່ຽວຂ້ອງກັບສິ່ງທີ່ຜິດຕໍ່ລະບຽບກົດໝາຍ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະບໍ່ພົວພັນ ແລະ ມີສ່ວນກ່ຽວຂ້ອງກັບສິ່ງເສບຕິດ, ເຄື່ອງດື່ມມຶນເມົາກ່ອນ ຫຼື ຊ່ວງໄລຍະເວລາປະຕິບັດວຽກງານນຳທ່ຽວ. (ຍົກເວັ້ນກໍລະນີທີ່ເປັນປະເພນີຂອງທ້ອງຖິ່ນ) (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ໃຫ້ນັກທ່ອງທ່ຽວມີສ່ວນຮ່ວມ ໃນການປະເມີນຄວາມເພິ່ງພໍໃຈຂອງຕົນເອງຕໍ່ການໃຫ້ບໍລິການ ແລະ ກິດຈະກຳຕ່າງໆທີ່ໄດ້ຈັດຂຶ້ນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າມີຄວາມເຂົ້າໃຈກ່ຽວກັບກົດລະບຽບຂອງການເປັນສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແລະ ຈະປະຕິບັດຕາມທຸກເງື່ອນໄຂ. (ເປັນສິ່ງທີ່ຕ້ອງປະຕິບັດ) |

<u>ເອກະສານຊ້ອນທ້າຍ 2</u>

ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດສຳລັບພະນັກງານນຳທ່ຽວຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ

| | |
|---|---|
| | **ຂ້າພະເຈົ້າຕົກລົງເຫັນດີ ແລະ ຈະປະຕິບັດຕາມບັນດາຂໍ້ກຳນົດ ແລະ ກົດລະບຽບຂອງສະມາຊິກຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໂດຍ:** |
| ☐ | ຊອກຮູ້ຮ່ຳຮຽນ ເພື່ອຍົກລະດັບຂີດຄວາມສາມາດທາງດ້ານການຕິດຕໍ່ສື່ສານໃຫ້ແກ່ຕົນເອງ ໂດຍສະເພາະແມ່ນການອະທິບາຍຄວາມໝາຍຄວາມສຳຄັນໃນເວລານຳທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະຕິບັດຕົນຕໍ່ກັບປະຊາຊົນໃນຊຸມຊົນ ແລະ ນັກທ່ອງທ່ຽວແບບເປັນມິດ ແລະ ມີຄວາມພາກພູມໃຈໃນການນຳສະ ເໜີຂໍ້ມູນຕ່າງໆຂອງຊຸມຊົນຂອງຕົນເອງໃຫ້ແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ຊຸກຍູ້ສົ່ງເສີມຊັບພະຍາກອນທຳມະຊາດ ແລະ ວັດທະນະທຳຂອງຊຸມຊົນ ໂດຍຈັດກິດຈະກຳຕ່າງໆເພື່ອໃຫ້ນັກທ່ອງທ່ຽວ ແລະ ປະຊາຊົນໃນທ້ອງຖິ່ນໄດ້ສຶກສາຄົ້ນຄ້ວາ ເພື່ອໃຫ້ເຫັນຄຸນຄ່າ ແລະ ຄວາມສຳຄັນຂອງຊັບພະຍາກອນທຳມະຊາດ ແລະ ວັດທະນະທຳຂອງຊຸມຊົນ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະຕິບັດຕາມນະໂຍບາຍ ແລະ ລະບຽບຫຼັກການຕ່າງໆ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ໃຫ້ບໍລິການທີ່ມີຄຸນນະພາບແກ່ນັກທ່ອງທ່ຽວ ຕາມມາດຕະຖານຂອງອາຊຽນ ພ້ອມກັນນັ້ນກໍເພື່ອປັບປຸງຄຸນນະພາບຂອງການໃຫ້ບໍລິການນຳທ່ຽວໃຫ້ສູງຂຶ້ນ ແລະ ໄດ້ມາດຕະຖານ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ການຮັບປະກັນຄຸນນະພາບຂອງການທ່ອງທ່ຽວ ແລະ ກິດຈະກຳທີ່ສະໜອງໃຫ້ນັກທ່ອງທ່ຽວ</u> |
| | <u>ການນຳສະເໜີຂໍ້ມູນໃຫ້ນັກທ່ອງທ່ຽວໂດຍຫຍໍ້</u> |

| | |
|---|---|
| ☐ | ຂ້າພະເຈົ້າຈະແຈ້ງໃຫ້ນັກທ່ອງທ່ຽວຮັບຮູ້ກ່ຽວກັບລາຍການ/ກິດຈະກຳຂອງການນຳທ່ຽວ, ລະດັບຄວາມຫຍຸ້ງຍາກ , ຄວາມອັນຕະລາຍ ແລະ ຄວາມປອດໄພ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະແຈ້ງໃຫ້ນັກທ່ອງທ່ຽວຮັບຮູ້ກ່ຽວກັບຂໍ້ກຳນົດ ແລະ ກົດລະບຽບຕ່າງໆໃນການປະພຶດປະຕິບັດຕົນເອງໃຫ້ຖືກຕ້ອງໃນການທ່ຽວຊົມໃນຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະແຈ້ງໃຫ້ນັກທ່ອງທ່ຽວຮັບຮູ້ລ່ວງໜ້າ ກ່ຽວກັບການມີສ່ວນຮ່ວມໃນການປະເມີນຄວາມເພິ່ງພໍໃຈຂອງຕົນເອງຕໍ່ກັບການໃຫ້ບໍລິການ ແລະ ກິດຈະກຳຕ່າງໆທີ່ຈັດຂຶ້ນ. ເນື່ອງໃນຂອງລາຍການນຳທ່ຽວ. |
| ☐ | ຂ້າພະເຈົ້າຮັບປະກັນບັນດາກິດຈະກຳຕ່າງໆທີ່ສ້າງຂຶ້ນມາເພື່ອໃຫ້ຄວາມມ່ວນຊື່ນ, ໃຫ້ຄວາມຮູ້ ແລະ ມີສ່ວນຮ່ວມລະຫວ່າງນັກທ່ອງທ່ຽວ ແລະ ຊຸມຊົນ. |
| ☐ | ຂ້າພະເຈົ້າຮັບປະກັນບັນດາກິດຈະກຳຕ່າງໆທີ່ສ້າງຂຶ້ນມາ ເພື່ອໃຫ້ນັກທ່ອງທ່ຽວມີການປະກອບສ່ວນເຂົ້າໃນການຊຸກຍູ້ສົ່ງເສີມ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ວັດທະນະທຳຂອງຊຸມຊົນ. |
| ☐ | ເພື່ອບໍ່ໃຫ້ເກີດຜົນກະທົບດ້ານລົບຕໍ່ຊັບພະຍາກອນທຳມະຊາດ, ວັດທະນະທຳ, ຮີດຄອງປະເພນີ ແລະ ວິຖີຊີວິດຂອງປະຊາຊົນໃນຊຸມຊົນ, ຂ້າພະເຈົ້າພະຍາຍາມແນະນຳໃຫ້ນັກທ່ອງທ່ຽວ ປະພຶດປະຕິບັດຕາມຂໍ້ກຳນົດ ແລະ ກົດລະບຽບຕ່າງໆຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຢ່າງເຂັ້ມງວດ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນບັນດາກິດຈະກຳຕ່າງໆທີ່ສ້າງຂຶ້ນມານັ້ນ ມີຂໍ້ມູນຄົບຖ້ວນກ່ຽວກັບວັດທະນະທຳ, ຮີດຄອງປະເພນີຂອງຊຸມຊົນ ແລະ ສະພາບແວດລ້ອມອ້ອມຂ້າງຂອງຊຸມຊົນ. |
| ☐ | ຂ້າພະເຈົ້າຮັບປະກັນບັນດາກິດຈະກຳຕ່າງໆ ທີ່ສ້າງຂຶ້ນມາເພື່ອໃຫ້ນັກທ່ອງທ່ຽວ ແລະ ປະຊາຊົນໃນທ້ອງຖິ່ນໄດ້ສຶກສາຄົ້ນຄ້ວາ ເພື່ອໃຫ້ເຫັນຄຸນຄ່າ ແລະ ຄວາມສຳຄັນຂອງຊັບພະຍາກອນທຳມະຊາດ ແລະ ວັດທະນະທຳຂອງຊຸມຊົນ. |
| ☐ | ຂ້າພະເຈົ້າຮັບປະກັນບັນດາກິດຈະກຳຕ່າງໆທີ່ສ້າງຂຶ້ນມານັ້ນ ແມ່ນເພື່ອແນ່ໃສ່ການສ້າງຄວາມເຂົ້າໃຈກ່ຽວກັບວັດທະນະທຳຕ່າງໆ ລະຫວ່າງວັດທະນະທຳຂອງນັກທ່ອງທ່ຽວ ແລະ ຊຸມຊົນ ແລະ ພ້ອມກັນນັ້ນກໍເປັນການເປີດໂອກາດໃຫ້ນັກທ່ອງທ່ຽວ ໄດ້ມີສ່ວນຮ່ວມເຂົ້າໃນກິດຈະກຳຕ່າງໆກັບຊຸມຊົນ ເພື່ອເປັນການສ້າງຄວາມເຂົ້າໃຈທີ່ດີ ແລະ ສົ່ງເສີມວັດທະນະທຳຂອງຊຸມຊົນ. |
| ☐ | ຂ້າພະເຈົ້າຮັບປະກັນບັນດາກິດຈະກຳຕ່າງໆທີ່ສ້າງຂຶ້ນມານັ້ນ ແມ່ນເພື່ອໃຫ້ຮູ້ຈັກວິທີການຈັດການກັບຂີ້ ເຫຍື້ອ/ສິ່ງເສດເຫຼືອ ໂດຍການປະຕິບັດຕາມຫຼັກການ 3 Rs: Reduce (ໃຊ້ໜ້ອຍລົງ), Reuse (ນຳມາໃຊ້ຄືນ), Recycle (ນຳມາຜະລິດຄືນ). |
| | <u>**ການສິ້ນສຸດລາຍການນຳທ່ຽວ**</u> |
| ☐ | ຂ້າພະເຈົ້າຈະສະເໜີໃຫ້ນັກທ່ອງທ່ຽວໃຫ້ມີສ່ວນຮ່ວມ ໃນການປະເມີນຄວາມເພິ່ງພໍໃຈ ຂອງຕົນເອງຕໍ່ກັບການໃຫ້ບໍລິການ ແລະ ກິດຈະກຳຕ່າງໆທີ່ຈັດຂຶ້ນ. |
| ☐ | ຂ້າພະເຈົ້າຈະແນະນຳໃຫ້ນັກທ່ອງທ່ຽວໄປທ່ຽວຊົມ ແລະ ມີສ່ວນຮ່ວມໃນກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃນແຫ່ງອື່ນໆອີກ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ໃນຕອນທ້າຍຂອງການນຳທ່ຽວ, ຂ້າພະເຈົ້າຈະສະຫຼຸບໂດຍຫຍໍ້ກ່ຽວກັບການນຳທ່ຽວ ແລະ ຄວາມປະທັບໃຈຂອງຕົນເອງທີ່ໄດ້ໃຫ້ບໍລິການນຳທ່ຽວ ແລະ ພ້ອມກັນນັ້ນກໍອວຍພອນໃຫ້ນັກທ່ອງທ່ຽວ ເພື່ອເຮັດ ໃຫ້ເຂົາເຈົ້າຮູ້ສຶກປະທັບໃຈໃນການໃຊ້ບໍລິການໃນຄັ້ງນີ້. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າມີຄວາມເຂົ້າໃຈກ່ຽວກັບກົດລະບຽບສຳລັບພະນັກງານນຳທ່ຽວຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແລະ ຈະປະຕິບັດຕາມທຸກເງື່ອນໄຂ. |



## <u>ເອກະສານຊ້ອນທ້າຍ 3</u>

ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດ ສໍາລັບຜູ້ປະກອບການອາຫານ ແລະ ເຄື່ອງດື່ມຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ

| | |
|---|---|
| | <u>ຂ້າພະເຈົ້າຈະປະຕິບັດຕາມກົດລະບຽບສໍາລັບສະມາຊິກ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໂດຍ:</u> |
| ☐ | ຊອກຮູ້ຮໍ່າຮຽນ ເພື່ອຍົກລະດັບຂີດຄວາມສາມາດດ້ານທັກສະການສື່ສານ ໂດຍສະເພາະແມ່ນການບໍລິການອາຫານ ແລະ ເຄື່ອງດື່ມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະຕິບັດຕົນຕໍ່ກັບປະຊາຊົນໃນຊຸມຊົນ ແລະ ນັກທ່ອງທ່ຽວແບບເປັນມິດ ແລະ ມີຄວາມພາກພູມໃຈໃນການນໍາສະເໜີຊຸມຊົນຂອງຕົນເອງໃຫ້ແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະກອບສ່ວນເຂົ້າໃສ່ການຊຸກຍູ້ສົ່ງເສີມ ແລະ ປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ວັດທະນະທໍາຮີດຄອງປະເພນີຂອງຊຸມຊົນໂດຍຈັດກິດຈະກໍາຕ່າງໆທີ່ສະແດງໃຫ້ນັກທ່ອງທ່ຽວ ໄດ້ເຫັນເຖິງຄວາມເປັນເອກະລັກສະ ເພາະຂອງຊຸມຊົນ ເຊັ່ນ: ການປຸງແຕ່ງອາຫານ ແລະ ອື່ນໆ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະຕິບັດຕາມນະໂຍບາຍ, ຂໍ້ກໍານົດ ແລະ ກົດລະບຽບຕ່າງໆ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຮັບປະກັນການໃຫ້ບໍລິການທີ່ມີຄຸນນະພາບ ໂດຍປະຕິບັດຕາມມາດຕະຖານຂອງອາຊຽນ ເພື່ອປັບປຸງການໃຫ້ບໍລິການອາຫານ ແລະ ເຄື່ອງດື່ມໃຫ້ແກ່ນັກທ່ອງທ່ຽວໃຫ້ໄດ້ມາດຕະຖານ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ການໃຫ້ບໍລິການອາຫານ ແລະ ເຄື່ອງດື່ມທີ່ມີຄຸນນະພາບ</u> |
| | <u>ການໃຫ້ບໍລິການອາຫານ</u> |
| ☐ | ຂ້າພະເຈົ້າຈະໃຫ້ບໍລິການອາຫານໃຫ້ແກ່ນັກທ່ອງທ່ຽວ ຕາມກໍານົດເວລາທີ່ທາງຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໄດ້ກໍານົດໄວ້. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະແຈ້ງລາຄາອາຫານ ໃຫ້ນັກທ່ອງທ່ຽວຮັບຊາບກ່ອນທີ່ຈະໃຫ້ບໍລິການ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະຈັດອາຫານຕາມທີ່ນັກທ່ອງທ່ຽວຕ້ອງການ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະໃຫ້ບໍລິການອາຫານແກ່ນັກທ່ອງທ່ຽວຢ່າງພຽງພໍລວມທັງອາຫານຫວ່າງ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະນໍາວັດຖຸດິບທີ່ມີໃນທ້ອງຖິ່ນມາປຸງແຕ່ງອາຫານ ເຊັ່ນ: ຜັກປອດສານພິດ, ຊີ້ນສົດ (ແຕ່ບໍ່ນໍາໃຊ້ຊີ້ນສັດທີ່ຫວງຫ້າມ ຫຼື ຜິດກົດໝາຍ) ແລະ ອື່ນໆ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະນໍາໃຊ້ວັດຖຸທີ່ເປັນມິດກັບສິ່ງແວດລ້ອມ ໃນການຫຸ້ມຫໍ່ອາຫານ ເຊັ່ນ: ໃບຕອງ ແລະ ອື່ນໆ (ຫຼີກລ້ຽງການນໍາໃຊ້ອຸປະກອນທີ່ເຮັດມາຈາກຢາງພຣາດສະຕິກ). (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນວ່າອາຫານໃນແຕ່ລະມື້ແມ່ນບໍ່ຊໍ້າກັນ ເພື່ອເປັນການສົ່ງເສີມອາຫານທີ່ເປັນປະເພນີ ແລະ ພື້ນ |

| | |
|---|---|
| | ບ້ານຂອງຊຸມຊົນໃຫ້ແກ່ນັກທ່ອງທ່ຽວ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເນັ້ນໃສ່ຮີດຄອງປະເພນີ ແລະ ອາຫານທ້ອງຖິ່ນໂດຍຈັດໃຫ້ມີອາຫານແບບທ້ອງຖິ່ນ ຢ່າງໜ້ອຍໜຶ່ງລາຍການໃນຄາບເຂົ້າແຕ່ລະຄາບ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຄຽງຄູ່ກັບການໃຫ້ບໍລິການອາຫານໃນແຕ່ລະຄາບ, ຂ້າພະເຈົ້າຈະໃຫ້ບໍລິການໝາກໄມ້ ຫຼື ຂອງຫວານ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ມາດຕະຖານທາງດ້ານສຸຂະອະນາໄມ</u> |
| ☐ | ຂ້າພະເຈົ້າຮັບປະກັນຈະບໍ່ໃຫ້ມີສັດລ້ຽງຢູ່ໃກ້ກັບບໍລິເວນເກັບມ້ຽນອາຫານ, ບ່ອນແຕ່ງກິນ ແລະ ບ່ອນຮັບປະທານອາຫານ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນຈະນໍາໃຊ້ນໍ້າທີ່ສະອາດໃນການປຸງແຕ່ງອາຫານ ເຊັ່ນ: ລ້າງຜັກ ແລະ ອື່ນໆ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນຈະໃຫ້ມີນໍ້າທີ່ສະອາດ ຫຼື ນໍ້າຢາລ້າງມື ຢູ່ບໍລິເວນປຸງແຕ່ງອາຫານ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະລ້າງມືໃສ່ນໍ້າຢາທຸກໆຄັ້ງກ່ອນ ແລະ ຫຼັງການກະກຽມ ແລະ ປຸງແຕ່ງອາຫານ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເກັບມ້ຽນ ແລະ ອະນາໄມເຮືອນຄົວ ຫຼື ບໍລິເວນປຸງແຕ່ງອາຫານທຸກໆຄັ້ງພາຍຫຼັງສໍາເລັດໃຫ້ສະອາດຢູ່ສະເໝີ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນອຸປະກອນທີ່ໃຊ້ກະກຽມ, ປຸ່ງແຕ່ງອາຫານ ແລະ ບັນຈຸອາຫານໃຫ້ມີຄວາມສະອາດເຊັ່ນ: ໝໍ້, ບ່ວງ, ຖ້ວຍ,ຈານ ແລະ ອື່ນໆ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນອຸປະກອນທີ່ໃຊ້ກະກຽມ, ປຸ່ງແຕ່ງອາຫານ ແລະ ບັນຈຸອາຫານໄດ້ຮັບການອະນາໄມ ແລະ ເກັບມ້ຽນໄວ້ບ່ອນທີ່ສະອາດ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນອາຫານໄດ້ຖືກເກັບມ້ຽນໄວ້ໃນວັດສະດຸ ທີ່ຖືກຕ້ອງຕາມຫຼັກສຸຂະອະນາໄມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນບໍລິເວນເຮືອນຄົວ ຫຼື ສະຖານທີ່ປຸງແຕ່ງອາຫານ ແລະ ຫ້ອງເກັບມ້ຽນອາຫານ ບໍ່ໃຫ້ມີແມງສາບ, ປວກ, ໜູ ແລະ ສັດປະເພດອື່ນໆ ທີ່ອາດສົ່ງຜົນກະທົບຕໍ່ສຸຂະພາບ ແລະ ທໍາລາຍອາຫານ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ການແລກປ່ຽນປະສົບການລະຫວ່າງນັກທ່ອງທ່ຽວ ແລະ ຊຸມຊົນ</u> |
| ☐ | ຂ້າພະເຈົ້າຮັບປະກັນຈະເປີດໂອກາດໃຫ້ນັກທ່ອງທ່ຽວ ໄດ້ມີສ່ວນຮ່ວມເຂົ້າໃນກິດຈະກໍາຕ່າງໆເພື່ອຮຽນຮູ້ກ່ຽວກັບຊຸມຊົນເຊັ່ນ: ການຮຽນຮູ້ວິທີການປຸ່ງແຕ່ງອາຫານແບບຊຸມຊົນແລະ ອື່ນໆ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະໃຫ້ນັກທ່ອງທ່ຽວ ໄດ້ແລກປ່ຽນບົດຮຽນກ່ຽວກັບການປຸງແຕ່ງອາຫານກັບຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າມີຄວາມເຂົ້າໃຈກ່ຽວກັບກົດລະບຽບ ສໍາລັບຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແລະ ຈະປະຕິບັດຕາມທຸກເງື່ອນໄຂ. (ເປັນສິ່ງທີ່ຕ້ອງປະຕິບັດ) |

## <u>ເອກະສານຊ້ອນທ້າຍ 4</u>

ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດຂອງຜູ້ໃຫ້ບໍລິການສະຖານທີ່ພັກເຊົາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

| | |
|---|---|
| | <u>ຂ້າພະເຈົ້າຈະປະຕິບັດຕາມຂໍ້ກໍານົດກົດລະບຽບຂອງ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ:</u> |
| ☐ | ຊອກຮູ້ຮໍ່າຮຽນເພື່ອເພີ່ມຄວາມຮູ້ຄວາມສາມາດດ້ານການຕິດຕໍ່ສື່ສານໃຫ້ແກ່ຕົນເອງ ໂດຍສະເພາະແມ່ນການໃຫ້ບໍລິການສະຖານທີ່ພັກເຊົາ ແລະ ເຮືອນພັກແຮມປະຊາຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະຕິບັດຕົນຕໍ່ກັບປະຊາຊົນໃນຊຸມຊົນ ແລະ ນັກທ່ອງທ່ຽວແບບເປັນມິດ ແລະ ມີຄວາມພາກພູມໃຈໃນການນໍາ |

| | |
|---|---|
| | ສະ ເໜີຊຸມຊົນຂອງຕົນເອງໃຫ້ແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະກອບສ່ວນເຂົ້າໃນການຊຸກຍູ້ສົ່ງເສີມ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ວັດທະນະທຳຮີດຄອງປະເພນີຂອງຊຸມຊົນ ໂດຍຈັດກິດຈະກຳຕ່າງໆທີ່ສະແດງໃຫ້ນັກທ່ອງທ່ຽວໄດ້ຮັບຮູ້ວິຖີຊີວິດ ແລະຄວາມເປັນເອກະລັກສະເພາະເຊັ່ນ:ຈັດກິດຈະກຳໃຫ້ພັກເຊົານຳເຮືອນພັກແຮມປະຊາຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ປະຕິບັດຕາມນະໂຍບາຍ, ຂໍ້ກຳນົດ ແລະ ກົດລະບຽບຕ່າງໆ ເພື່ອຮັບປະກັນຄວາມປອດໄພໃຫ້ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຮັບປະກັນຈະໃຫ້ການບໍລິການທີ່ມີຄຸນນະພາບໂດຍປະຕິບັດຕາມມາດຕະຖານຂອງອາຊຽນ ເພື່ອປັບປຸງການບໍລິການສະຖານທີ່ພັກເຊົາໃຫ້ແກ່ນັກທ່ອງທ່ຽວໃຫ້ໄດ້ມາດຕະຖານ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ການໃຫ້ບໍລິການສະຖານທີ່ພັກເຊົາທີ່ມີຄຸນນະພາບ</u> |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ລະບົບການຈອງຂອງນັກທ່ອງທ່ຽວ ເຊິ່ງລວມມີປື້ມຕິດຕາມ, ມື້ເດີນທາງມາຮອດ, ມື້ເດີນທາງກັບ ແລະ ມື້ເດີນທາງກັບຄືນມາພັກໃໝ່. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະໃຫ້ນັກທ່ອງທ່ຽວໄດ້ມີສ່ວນຮ່ວມໃນການຮຽນຮູ້ວັດທະນະທຳຕ່າງໆ, ການດຳລົງຊີວິດຢູ່ໃນຊຸມຊົນ ແລະ ຄອບຄົວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະສະໜອງອຸປະກອນຕ່າງໆທີ່ຈຳເປັນໃຫ້ແກ່ນັກທ່ອງທ່ຽວ ເຊັ່ນ: ອຸປະກອນການຕິດຕໍ່ສື່ສານ ແລະ ອື່ນໆ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ໃນການອະນາໄມ ແລະ ບົວລະບັດຮັກສາບໍລິເວນເຮືອນ ຫຼື ສະຖານທີ່ພັກແຮມບໍ່ໃຫ້ມີສັດ ຫຼື ແມງໄມ້ທີ່ເປັນອັນຕະລາຍຊະນິດຕ່າງໆ ເພື່ອປ້ອງກັນບໍ່ໃຫ້ເກີດອັນຕະລາຍແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນວ່າ ບັນດາສັດລ້ຽງຂອງຂ້າພະເຈົ້າມີສຸຂະພາບແຂງແຮງ ແລະ ບໍ່ມີພະຍາດຕິດຕໍ່. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ໃນການບຳລຸງຮັກສາ ແລະ ກະກຽມອຸປະກອນການຕິດຕໍ່ສື່ສານ ເຊັ່ນ: ໂທລະສັບ ເພື່ອໄວ້ຕິດຕໍ່ກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນກໍລະນີນັກທ່ອງທ່ຽວໄດ້ຮັບອຸປະຕິເຫດ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະບໍ່ນຳໃຊ້ບັນດາສິ້ນສ່ວນຂອງສັດປ່າຊະນິດຕ່າງໆ ເພື່ອມາຕົກແຕ່ງ ແລະ ເອ້ຢ້ອງຕາມເຮືອນ ຫຼື ສະຖານທີ່ພັກແຮມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນພາຍໃນຫ້ອງນອນຂອງນັກທ່ອງທ່ຽວມີອາກາດທີ່ປອດໂປ່ງ ແລະ ມີໄຟຟ້າໃຊ້ພຽງພໍ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ຫ້ອງນອນສຳລັບບໍລິການໃຫ້ນັກທ່ອງທ່ຽວ</u> |
| ☐ | ຂ້າພະເຈົ້າຮັບປະກັນຈະໃຫ້ມີຫ້ອງນອນບໍລິການໃຫ້ນັກທ່ອງທ່ຽວຕະຫຼອດເວລາ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນຈະໃຫ້ຄວາມເປັນສ່ວນຕົວ ແກ່ນັກທ່ອງທ່ຽວໃນການພັກແຮມໂດຍຈະຂັ້ນ ຫຼື ແຍກຫ້ອງນອນຂອງນັກທ່ອງທ່ຽວອອກເປັນແຕ່ລະຫ້ອງ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ໃນການອະນາໄມ ແລະ ບົວລະບັດຮັກສາຫ້ອງນອນໃຫ້ມີຄວາມສະອາດຢູ່ສະເໝີ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະບໍລິການຜ້າຫົ່ມ, ຜ້າປູຕຽງ ແລະ ເສື່ອນອນທີ່ສະອາດໃຫ້ແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ ) |
| ☐ | ຂ້າພະເຈົ້າຈະໃຫ້ຂອງຂັວນແກ່ນັກທ່ອງທ່ຽວທຸກໆຄັ້ງ ເພື່ອເປັນການຕ້ອນຮັບ ເຊັ່ນ: ເຄື່ອງຫັດຖະກຳທີ່ເຮັດ ຫຼື ຜະ ລິດຢູ່ພາຍໃນຊຸມຊົນ ແລະ ຜະລິດຕະພັນອື່ນໆທີ່ເຫັນວ່າມີຄວາມເໝາະສົມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະໃຫ້ບໍລິການມຸ້ງທີສະອາດແກ່ນັກທ່ອງທ່ຽວ ເພື່ອປ້ອງກັນຍຸງ ແລະ ແມງໄມ້ທີ່ອາດຈະເປັນອັນຕະລາຍແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ຫ້ອງນໍ້າ/ຫ້ອງອາບນໍ້າ</u> |
| ☐ | ຂ້າພະເຈົ້າຮັບປະກັນຈະໃຫ້ຄວາມເປັນສ່ວນຕົວແກ່ນັກທ່ອງທ່ຽວໃນການໃຊ້ຫ້ອງນໍ້າ/ຫ້ອງອາບນໍ້າໂດຍຈັດສັນ |

| | |
|---|---|
| | ອຸປະກອນຕ່າງໆເຊິ່ງປະກອບມີ: ຖັງນໍ້າທີ່ສະອາດ, ສະບູ, ເຈ້ຍອະນາໄມ, ຖັງໃສ່ຂີ້ເຫຍື້ອ ແລະ ອື່ນໆ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ອະນາໄມ ແລະ ບົວລະບັດຮັກສາຫ້ອງນໍ້າໃຫ້ສະອາດທຸກໆວັນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ການຮັກສາຄວາມປອດໄພ ແລະ ສຸຂະອະນາໄມ</u> |
| ☐ | ຖ້າຂ້າພະເຈົ້າບໍລິການອາຫານ ແລະ ເຄື່ອງດື່ມ, ຂ້າພະເຈົ້າຈະປະຕິບັດຫລັກການສຸຂະອະນາໄມທີ່ໄດ້ລະບຸໄວ້ໃນລະບຽບການສໍາລັບຜູ້ໃຫ້ບໍລິການອາຫານ ແລະ ເຄື່ອງດື່ມຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະກະກຽມເຄື່ອງປະຖົມພະຍາບານ ແລະ ກວດສອບທຸກໆອາທິດເພື່ອຄວາມພ້ອມໃນການໃຊ້ງານ. |
| ☐ | ຂ້າພະເຈົ້າມີໄຟສາຍໃຫ້ນັກທ່ອງທ່ຽວໃຊ້ໃນຕອນກາງຄືນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າມີຄວາມເຂົ້າໃຈກ່ຽວກັບກົດລະບຽບ ສໍາລັບຜູ້ປະກອບການບໍລິການສະຖານທີ່ພັກແຮມຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແລະ ຈະປະຕິບັດຕາມທຸກໆເງື່ອນໄຂ. (ເປັນສິ່ງທີ່ຕ້ອງປະຕິບັດ) |

## <u>ເອກະສານຊ້ອນທ້າຍ 5</u>

ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດ ສໍາລັບຜູ້ປະກອບການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.

| | |
|---|---|
| | <u>ສືບຕໍ່ສຶກສາຄົ້ນຄ້ວາ ແລະ ຍົກລະດັບການຕິດຕໍ່ສື່ສານໃຫ້ມີປະສິດທິພາບ</u> |
| ☐ | ຂ້າພະເຈົ້າຈະຊອກຮູ້ຮໍ່າຮຽນເພື່ອຍົກລະດັບຂີດຄວາມສາມາດ ໃນທຸກດ້ານໃນຂົງເຂດການບໍລິການນັກທ່ອງທ່ຽວຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະຊອກຮູ້ຮໍ່າຮຽນເພື່ອຍົກລະດັບຂີດຄວາມສາມາດ ໃຫ້ແກ່ຕົນເອງ ເຊັ່ນ: (1) ການທ່ອງທ່ຽວແບບຍືນຍົງ, (2) ເຕັກນິກການຮັບມືກັບນັກທ່ອງທ່ຽວເປັນກຸ່ມ, (3) ທັກສະການເອົາໃຈໃສ່/ບໍລິການລູກຄ້າ, (4) ທັກສະການຕິດຕໍ່ສື່ສານ, (5) ການປະຖົມພະຍາບານ ແລະ ຄວາມປອດໄພ, (6) ບັນຫາກ່ຽວກັບວັດທະນະທໍາ ແລະ ສິ່ງແວດລ້ອມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະພະຍາຍາມຊອກຮູ້ຮໍ່າຮຽນ ເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ຕົນເອງທາງດ້ານສະພາບແວດລ້ອມ ແລະ ວັດທະນະທໍາຂອງທ້ອງຖິ່ນເຊັ່ນ: ປະຫວັດຄວາມເປັນມາຂອງຊຸມຊົນ, ວັດທະນະທໍາຮີດຄອງປະເພນີ, ພູມສາດ, ພືດ ແລະ ສັດຊະນິດຕ່າງໆທີ່ມີໃນທ້ອງຖິ່ນ ແລະ ຫຼັກການການທ່ອງທ່ຽວຍືນຍົງ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນກ່ຽວກັບຂໍ້ມູນທາງດ້ານສະພາບແວດລ້ອມ ແລະ ວັດທະນະທໍາທີ່ກ່ຽວຂ້ອງໄດ້ຮັບການນໍາສະ ເໜີຢ່າງຖືກຕ້ອງ ແລະ ເໝາະສົມໃນເວລາລົມກັບແຂກ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະພະຍາຍາມຊອກຮູ້ຮໍ່າຮຽນດ້ານທັກສະການສື່ສານໃຫ້ແກ່ຕົນເອງ ໂດຍສະເພາະແມ່ນການຕິດຕໍ່ສື່ສານທາງພາສາ ເພື່ອຮັບປະກັນຄຸນະພາບຂອງການໃຫ້ບໍລິການ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ການປະພຶດປະຕິບັດກັບປະຊາຊົນໃນຊຸມຊົນ ແລະ ນັກທ່ອງທ່ຽວ</u> |
| ☐ | ຂ້າພະເຈົ້າຈະເປັນມິດທີ່ດີ, ມີມາລະຍາດທີ່ດີ, ມີຄວາມອ່ອນນ້ອມຖ່ອມຕົນ ແລະ ຊື່ສັດສຸດຈະລິດຕໍ່ກັບຊຸມຊົນ ແລະ ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະບໍ່ກ່ຽວຂ້ອງກັບກິດຈະກໍາຕ່າງໆທີ່ຜິດຕໍ່ລະບຽບກົດໝາຍ ເຊັ່ນ: ການທ່ອງທ່ຽວທາງເພດ, ການຄ້າ-ຂາຍຢາເສບຕິດ, ການໃຊ້ແຮງງານເດັກ ຫຼື ການຄ້າມະນຸດ. ແຕ່ຂ້າພະເຈົ້າຈະສົ່ງເສີມ ແລະ ຍຶດຖືຫຼັກການ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເຄົາລົບນັບຖືສິດ ແລະ ສຽງຂອງສະມາຊິກທຸກໆຄົນໃນຊຸມຊົນ ແລະ ເປີດໂອກາດ ໃຫ້ສະມາຊິກ ທຸກຄົນມີສິດເທົ່າທຽມກັນໃນການມີສ່ວນຮ່ວມກິດຈະກໍາຕ່າງໆ ເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ ແລະ ຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>ການປົກປັກຮັກສາ ທໍາມະຊາດ ແລະ ມໍລະດົກທາງວັດທະນະທໍາ</u> |

| | |
|---|---|
| ☐ | ຂ້າພະເຈົ້າຈະເຄົາລົບນັບຖື ແລະ ມີສ່ວນຮ່ວມໃນການຊຸກຍູ້ສົ່ງເສີມ ແລະ ອະນຸລັກຮີດຄອງປະເພນີ ແລະ ຊັບພະຍາກອນທຳມະຊາດຂອງທ້ອງຖິ່ນ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນຈະໃຫ້ນັກທ່ອງທ່ຽວປະຕິບັດຕາມຂໍ້ກຳນົດ ແລະ ກົດລະບຽບຕ່າງໆຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃນການທ່ຽວຊົມຊຸມຊົນ ເພື່ອຫຼີກລ່ຽງບໍ່ໃຫ້ເກີດຜົນກະທົບດ້ານລົບຕໍ່ກັບຊັບພະຍາກອນທຳມະຊາດ, ວັດທະນະທຳ ແລະ ປະຊາຊົນໃນຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ໃນການສ້າງຄວາມເຂົ້າໃຈ ກ່ຽວກັບຄວາມແຕກຕ່າງທາງດ້ານວັດທະນະທຳ ລະຫວ່າງ ວັດທະນະທຳຂອງນັກທ່ອງທ່ຽວ ແລະ ຊຸມຊົນ ແລະ ເປີດໂອກາດໃຫ້ນັກທ່ອງທ່ຽວໄດ້ ມີສ່ວນຮ່ວມເຂົ້າໃນ ກິດຈະກຳຕ່າງໆກັບຊຸມຊົນ ເພື່ອເປັນການສ້າງຄວາມເຂົ້າໃຈທີ່ດີ ແລະ ສົ່ງເສີມວັດທະນະທຳຂອງຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເປັນແບບຢ່າງທີ່ດີໃຫ້ແກ່ສະມາຊິກໃນຊຸມຊົນ ແລະ ນັກທ່ອງທ່ຽວ ໃນການຈັດການກັບຂີ້ເຫຍື້ອ /ສິ່ງເສດເຫຼືອ ໂດຍການປະຕິບັດຕາມຫຼັກການ 3 Rs: Reduce (ໃຊ້ໜ້ອຍລົງ), Reuse (ນຳມາໃຊ້ຄືນ), Recycle (ນຳມາຜະລິດຄືນ). |
| ☐ | ຂ້າພະເຈົ້າຈະປະຕິບັດຕາມລະບຽບຫຼັກການ ແລະ ກົດໝາຍຕ່າງໆເຊັ່ນ: ການປົກປັກຮັກສາສິ່ງແວດລ້ອມ ແລະ ສັດປ່າ ແລະ ອື່ນໆທີ່ກ່ຽວຂ້ອງ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>**ການເອົາໃຈໃສ່ ແລະ ຮັກສາຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ**</u> |
| ☐ | ຂ້າພະເຈົ້າຈະປະຕິບັດຕາມນະໂຍບາຍ ແລະ ລະບຽບຫຼັກການຕ່າງໆ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ເພື່ອຮັບປະກັນຄວາມປອດໄພຂອງນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະກຽມເຄື່ອງປະຖົມພະຍາບານທຸກໆຄັ້ງ ເມື່ອໃຫ້ບໍລິການແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະນຸ່ງເຄື່ອງແບບຕາມທີ່ຄະນະຮັບຜິດຊອບໄດ້ກຳນົດໃຫ້ ແລະ ຖືບັດພະນັກງານທຸກໆຄັ້ງເມື່ອໃຫ້ບໍລິການແກ່ນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະກຽມຄວາມພ້ອມໃນການຕິດຕໍ່ປະສານງານກັບພາກສ່ວນຕ່າງໆ ເຊັ່ນ: ໂທລະສັບ, ໂຟນນີ, ພຸໄຟເພື່ອສົ່ງສັນຍານຂໍຄວາມຊ່ວຍເຫຼືອ ແລະ ອື່ນໆ) ທີ່ກ່ຽວຂ້ອງໃນກໍລະນີທີ່ນັກທ່ອງທ່ຽວໄດ້ຮັບອຸປະຕິເຫດ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>**ການໃຫ້ບໍລິການແກ່ນັກທ່ອງທ່ຽວທີ່ມີຄຸນນະພາບ**</u> |
| ☐ | ຂ້າພະເຈົ້າຈະໃຫ້ບໍລິການແກ່ນັກທ່ອງທ່ຽວແບບມືອາຊີບ ໂດຍມີການກະກຽມ ແລະ ວາງແຜນບັນດາກິດຈະກຳຕ່າງໆ ທີ່ຈະຈັດຕັ້ງປະຕິບັດໄວ້ລ່ວງໜ້າເປັນຢ່າງດີ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະບໍ່ພົວພັນ ແລະ ມີສ່ວນກ່ຽວຂ້ອງກັບສິ່ງເສບຕິດ, ເຄື່ອງດື່ມມຶນເມົາກ່ອນ ຫຼື ຊ່ວງໄລຍະດຳເນີນການໃຫ້ບໍລິການນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ໃຫ້ນັກທ່ອງທ່ຽວມີສ່ວນຮ່ວມ ໃນການປະເມີນຄວາມເພິ່ງພໍໃຈຂອງຕົນເອງຕໍ່ການໃຫ້ບໍລິການ ແລະ ກິດຈະກຳຕ່າງໆທີ່ໄດ້ຈັດຂຶ້ນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>**ການດຳເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ**</u> |
| ☐ | ຂ້າພະເຈົ້າຈະປະຕິບັດຕາມຂໍ້ກຳນົດ ແລະ ລະບຽບກົດໝາຍໃນການປະພຶດປະຕິບັດຕົນເອງຢູ່ໃນຊຸມຊົນ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະຊຸກຍູ້ສົ່ງເສີມ ການດຳເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຢູ່ໃນຊຸມຊົນ ໂດຍການເອົາໃຈໃສ່ໃນການໃຫ້ບໍລິການ ແລະ ເຂົ້າຮ່ວມ ກິດຈະກຳຕ່າງໆຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະສືບຕໍ່ໃນການຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໂດຍສະເພາະແມ່ນຄວາມສຳຄັນ ແລະ ຄຸນຄ່າຂອງຊັບພະຍາກອນທຳມະຊາດ ແລະ ວັດທະນະທຳຂອງຊຸມຊົນ. ພ້ອມກັນນັ້ນກໍຈະຖ່າຍທອດຄວາມຮູ້ໃຫ້ແກ່ພະນັກງານໃນຊຸມຊົນ ເຊັ່ນ: ພະນັກງານນຳທ່ຽວ ແລະ ບຸກຄົນອື່ນໆທີ່ກ່ຽວຂ້ອງ. (ເປັນສິ່ງທີ່ຕ້ອງປະຕິບັດ) |

| | |
|---|---|
| ☐ | ຂ້າພະເຈົ້າຈະເຄົາລົບນັບຖືຮີດຄອງປະເພນີຂອງຊຸມຊົນ, ປະຕິບັດຕາມລະບຽບກົດໝາຍຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ການປະພຶດປະຕິບັດຕົນໃຫ້ຖືກຕ້ອງຢູ່ໃນຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະປຶກສາຫາລືກັບຄະນະຮັບຜິດຊອບ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຊຸມຊົນຖ້າຫາກວ່າກິດຈະກໍາທີ່ຈັດຂຶ້ນນັ້ນ ອາດສົ່ງຜົນກະທົບໂດຍກົງຕໍ່ກັບສະພາບແວດລ້ອມທໍາມະຊາດ ແລະ ວັດທະນະທໍາຂອງຊຸມຊົນ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະຕິດຕາມ, ກວດກາ ແລະ ລາຍງານໃຫ້ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຮັບຮູ້ກ່ຽວກັບການຈັດຕັ້ງປະຕິບັດກິດຈະກໍາຕ່າງໆ ເພື່ອໃຫ້ມີຄວາມຍືນຍົງ, ເປັນມິດກັບສິ່ງແວດລ້ອມ ແລະ ເປັນທີ່ຍອມຮັບຂອງປະຊາຊົນໃນຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເກັບມ້ຽນຂີ້ເຫຍື້ອ ທີ່ນັກທ່ອງທ່ຽວນໍາເຂົ້າມາໃນພື້ນທີ່ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໂດຍສະເພາະແມ່ນຂີ້ເຫຍື້ອທີ່ບໍ່ສາມາດລະລາຍໄດ້ເຊັ່ນ: ຖົງຢາງ, ຂວດແກ້ວ ແລະ ອື່ນໆ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະຫຼຸດຜ່ອນໃນການຊົມໃຊ້ຍານພາຫະນະໃນການຂົນສົ່ງຢູ່ໃນພື້ນທີ່ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ໃນການນໍາສະເໜີຂໍ້ມູນທີ່ຖືກຕ້ອງກັບສະພາບຄວາມເປັນຈິງກ່ຽວກັບຄຸນຄ່າ ແລະ ຄວາມສໍາຄັນຂອງສະພາບແວດລ້ອມທໍາມະຊາດ ແລະ ວັດທະນະທໍາຂອງຊຸມຊົນ ໂດຍການສົມທົບກັບພະນັກງານນໍາທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະອະທິບາຍລະບຽບການຕ່າງໆ ໃນການປະພຶດປະຕິບັດຕົນເອງໃຫ້ແກ່ນັກທ່ອງທ່ຽວໄດ້ຮັບຮູ້ ແລະ ເຂົ້າໃຈ ເພື່ອບໍ່ໃຫ້ເກີດຜົນກະທົບດ້ານລົບຕໍ່ກັບຊຸມຊົນ ໂດຍເນັ້ນໜັກໃສ່ການໃຫ້ເຄົາລົບ ແລະ ນັບຖືຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| | <u>**ຜູ້ປະກອບການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ**</u> |
| ☐ | ຂ້າພະເຈົ້າຈະກໍານົດຈໍານວນນັກທ່ອງທ່ຽວໃຫ້ແທດເໝາະກັບສະພາບຂອງພື້ນທີ່, ເພື່ອຮັບປະກັນຄຸນະພາບຂອງການໃຫ້ບໍລິການ ແລະ ຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນໂດຍການຕົກລົງເຫັນດີຈາກຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະໃຫ້ການຮ່ວມມື ແລະ ສົ່ງເສີມຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໃນການຈັດຝຶກອົບຮົມໃຫ້ຄວາມຮູ້ແກ່ພະນັກງານນໍາທ່ຽວສະເພາະພື້ນທີ ແລະ ພະນັກງານຮັກສາສັດປ່າ ຫລື ປະຊາຊົນໃນຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າມີໜັງສືອະນຸຍາດໃນການດໍາເນີນ ແລະ ຈັດຕັ້ງປະຕິບັດກິດຈະກໍາຕ່າງໆ ຕາມທີ່ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໄດ້ກໍານົດໄວ້. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເອົາໃຈໃສ່ໃນການສົ່ງເສີມໃຫ້ນັກທ່ອງທ່ຽວມີປະກັນໄພໃນການເດີນທາງ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະເຮັດການຕະຫລາດໃຫ້ເໝາະສົມ ແລະ ສອດຄ່ອງກັບຄວາມຄາດຫວັງຂອງລູກຄ້າຂອງການທ່ອງທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະດໍາເນີນກິດຈະການດ້ວຍຄວາມຊື່ສັດສຸດຈະລິດ ແລະ ເປັນມິດກັບຊຸມຊົນ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນບັນດາກິດຈະກໍາທີ່ມີຄວາມສ່ຽງສູງ ຕ້ອງໄດ້ຮັບການແນະນໍາຈາກພະນັກງານທີ່ໄດ້ຮັບການຝຶກອົບຮົມມາເປັນຢ່າງດີ ແລະ ມີທັກສະທີ່ດີເພື່ອປ້ອງກັນຄວາມປອດໄພຂອງນັກທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຮັບປະກັນພະນັກງານໃຫ້ບໍລິການໄດ້ຮັບການຝຶກອົບຮົມກ່ຽວກັບການປະຖົມພະຍາບານເບື້ອງຕົ້ນ. |
| ☐ | ຂ້າພະເຈົ້າຈະໃຫ້ນັກທ່ອງທ່ຽວປະເມີນຄວາມປະທັບໃຈຂອງຕົນເອງ ຕໍ່ການໃຫ້ບໍລິການ ແລະ ກິດຈະກໍາທີ່ຈັດຂຶ້ນຫຼັງຈາກນັ້ນກໍຈະສັງລວມເອົາຄໍາຄິດເຫັນຂອງນັກທ່ອງທ່ຽວແລ້ວສົ່ງໃຫ້ຄະນະ ຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.(ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະຮັກສາການເປັນສະມາຊິກຂອງອົງກອນວິຊາຊີບການທ່ອງທ່ຽວ. (ເປັນສິ່ງທີ່ຕ້ອງປະຕິບັດ) |
| ☐ | ຂ້າພະເຈົ້າຈະໃຊ້ບໍລິການສະຖານທີ່ພັກແຮມທີ່ເປັນມິດ ແລະ ກົມກືນກັບສະພາບແວດລ້ອມ.(ເປັນສິ່ງທີ່ຕ້ອງປະຕິບັດ) |

| | |
|---|---|
| ☐ | ຂ້າພະເຈົ້າຈະສະໜອງຂໍ້ມູນກ່ອນການນຳທ່ຽວໃຫ້ແກ່ລູກຄ້າຮັບຮູ້ກ່ຽວກັບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ອຸປະກອນທີ່ຈຳເປັນ ແລະ ແນະນຳລະບຽບໃນການປະພຶດປະຕິບັດຕົນເອງໃຫ້ຖືກຕ້ອງໃນຊຸມຊົນ. |
| ☐ | ຂ້າພະເຈົ້າມີຄວາມເຂົ້າໃຈກ່ຽວກັບກົດລະບຽບສຳລັບຜູ້ປະກອບການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ແລະ ຈະປະຕິບັດຕາມທຸກເງື່ອນໄຂ. (ເປັນສິ່ງທີ່ຕ້ອງປະຕິບັດ) |



## ຄະນະຮັບຜິດຊອບຈັດພິມ

| | | |
|---|---|---|
| ຊີ້ນຳລວມ | : ທ່ານ ປອ ອາລຸນ ບຸນມີໄຊ | ຫົວໜ້າກົມພັດທະນາການທ່ອງທ່ຽວ. |
| | : ທ່ານ ທະວີເພັດ ອຸລາ | ຜູ້ຈັດການໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວ,ຮອງຫົວໜ້າກົມ ພັດທະນາການທ່ອງທ່ຽວ. |
| | : ທ່ານ ວິລະ ຈັນທະວົງ | ຊ່ຽວຊານໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວ. |
| ແປໂດຍ | : ທ່ານ ທີນເພັດ ໄຊຍະວົງ | ຜູ້ຊ່ຽວຊານດ້ານການທ່ອງທ່ຽວແບບອະນຸລັກ. |
| ອອກແບບ, ຈັດໜ້າ | : ນາງ ລຳພິດ ໄຊຍະວົງ | ວິຊາການກົມພັດທະນາການທ່ອງທ່ຽວ |

**2019**